Cover page in front and on back are available with UNIFEM

# ຄູ່ມື ສຳລັບ ຄູຝຶກ
# ເພື່ອຈັດ ຝຶກອົບຮົມ "ບົດບາດ ຍິງ-ຊາຍ"

ຄວາມຮູ້, ຄວາມເຂົ້າໃຈ ແລະ ທັກສະ ໃນເລື້ອງ ບົດບາດ ຍິງ-ຊາຍ ແມ່ນເລື້ອງໜຶ່ງ ທີ່ສັງຄົມລາວຍັງບໍ່ຮູ້ກັນຫລາຍ ເຖິງວ່າມັນແມ່ນເລື້ອງໜຶ່ງທີ່ຮຽກຮ້ອງໃຫ້ມີການປ່ຽນແປງທີ່ເໝາະສົມ ກໍຕາມ. ປື້ມຄູ່ມືນີ້ ເປັນໝາກຜົນໜຶ່ງ ທີ່ຖືກພັດທະນາຂຶ້ນມາ ຈາກຄວາມຮູ້ ແລະ ປະສົບການຍາວນານ ໃນວຽກງານພັດທະນາຊຸມຊົນ ເປັນຕົ້ນຕໍ.

ຄູ່ມືນີ້ ແມ່ນສ້າງຂຶ້ນມາເພື່ອແນະນຳ ຄູຝຶກ ເລື້ອງ ບົດບາດ ຍິງ-ຊາຍ ແລະ ທຸກພາກສ່ວນ ທີ່ກ່ຽວຂ້ອງ ທີ່ສົນໃຈ ຈະນຳໄປໃຊ້, ຫລື ໝູນໃຊ້, ໃນການກະກຽມ ແລະ ຈັດ ການອົບຮົມ ບົດບາດ ຍິງຊາຍ ເພື່ອໃຫ້ຄວາມຮູ້, ທັກສະ, ແລະ ທັດສະນະ ຂັ້ນພື້ນຖານ ໃນເລື້ອງ ບົດບາດ ຍິງ-ຊາຍ.

ຄູ່ມືນີ້ ແນະນຳ ຫົວຂໍ້ບົດຮຽນ ຂອງ ປັດຊະຍາ ບົດບາດ ຍິງ-ຊາຍ, ສ້າງທັກສະ ການວິເຄາະ ຫົວຂໍ້ທັງຫລາຍ ໃນປັດຊະຍາ ບົດບາດ ຍິງ-ຊາຍ, ສ້າງທັກສະ ການວິເຄາະດ້ວຍສາຍຕາ ບົດບາດ ຍິງຊາຍ ໃນ ເຫດການຕົວຈິງທີ່ມີຢູ່ໃນຊີວິດຂອງສັງຄົມ.

ກິດຈະກຳ ເກືອບທັງໝົດ ທີ່ສະເໜີໃນ ຄູ່ມືນີ້ ແມ່ນ ແນໃສ່ ສົ່ງເສີມການຄິດດ້ວຍຕົນເອງ ຂອງຜູ້ເຂົ້າຮັບອົບຮົມ, ແລະ ສົ່ງເສີມໃຫ້ຄິດແບບວິເຄາະວິຈານຢ່າງກວ້າງຂວາງ ໂດຍໃຊ້ປັດຊະຍາ ບົດບາດ ຍິງ-ຊາຍ ເປັນຈຸດຢືນ.

ຄູຝຶກ ເລື້ອງ ບົດບາດ ຍິງ-ຊາຍ ຄວນມີຂໍ້ມູນທີ່ກ່ຽວຂ້ອງຈາກຫລາຍໆແຫລ່ງຕື່ມອີກ ເພື່ອເຮັດ ໃຫ້ການສົ່ງເສີມ ການຄິດແບບວິເຄາະວິຈານໃຫ້ສົມບູນຂຶ້ນຢູ່ເລື້ອຍໆ ເພື່ອຊ່ວຍຜູ້ເຂົ້າຮ່ວມອົບຮົມຕໍ່ໄປ, ເຊັ່ນວ່າ : ບົດລາຍງານການສຶກສາວິເຄາະ, ບົດວິໃຈສັງຄົມຕ່າງໆ ທີ່ ຄຳນຶງ ເຖິງເລື້ອງ ບົດບາດຍິງ-ຊາຍ; ນະໂຍບາຍແຫ່ງຊາດຕໍ່ແມ່ຍິງ, ແຜນງານຕ່າງໆ ທີ່ມີໃນພາກພື້ນ; ປະສົບຂອງພາກສ່ວນອື່ນໃນປະເທດ.

ນອກຈາກນີ້ ຄູຝຶກ ບົດບາດ ຍິງ-ຊາຍ ຄວນສົນໃຈ ເລື້ອງ ຮີດຄອງປະເພນີຂອງເຜົ່າ ຕ່າງໆ ໃນປະເທດ ດ້ວຍສາຍຕາບົດບາດ ຍິງ-ຊາຍ ເພື່ອເຮັດໃຫ້ການຈັດ ອົບຮົມເລື້ອງບົດບາດ ຍິງ-ຊາຍ ມີເນື້ອຫາທີ່ມີຊີວິດຊີວາ ເພີ່ມໃສ່ປັດຊະຍາ (ທິດສະດີ) ບົດບາດ ຍິງ-ຊາຍ.

ຄູ່ມືນີ້ ມີຈຸດພິເສດໃນຕົວ ຄື ມີວິທີການ ໃຫ້ຄູຝຶກໄດ້ເລັງໃສ່ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມອົບຮົມວິເຄາະໃຫ້ເຫັນ ບັນຫາ ສິດທິຂອງແມ່ຍິງ ເປັນຕົ້ນຕໍ, ທັງໃນເວລາທີ່ເຂົາເຈົ້າວິເຄາະແຕ່ລະຫົວຂໍ້ຂອງປັດຊະຍາ ບົດບາດ ຍິງ-ຊາຍ, ແລະ ໃນເວລາທີ່ເຂົາເຈົ້າວິເຄາະເຫດການໃນຊີວິດຕົວຈິງ. ຄູຝຶກຄວນ ອະທິບາຍ ຄຳວ່າ "ບົດບາດ" ໃຫ້ຈະແຈ້ງ ວ່າມັນ ແມ່ນ "ສິດທິ ແລະ ພັນທະ", ການອະທິບາຍເຊັ່ນນີ້ມັນຊ່ວຍ ໃຫ້ສາມາດ ວິເຄາະໄດ້ຊັດເຈນກວ່າ ເພື່ອຊີ້ ໃຫ້ເຫັນວ່າ ລະຫວ່າງ ຍິງ-ຊາຍ ມີສິດທິເທົ່າທຽມກັນ ຫລື ບໍ່, ມີຄວາມເປັນທຳ ຫລື ບໍ່, ແລະ ຈຳເປັນຈະຕ້ອງມີການປ່ຽນແປງແນວໃດເພື່ອປັບປຸງໃຫ້ມີຄວາມເປັນທຳສຳລັບແມ່ຍິງ.

ຄູຝຶກ ບົດບາດ ຍິງ-ຊາຍ ຄວນມີຄວາມຊຳນານ ໃນການສ້າງຄວາມເຂົ້າໃຈທີ່ໜັກແໜ້ນ ໃນທີ່ອົບຮົມໃຫ້ໄດ້ ດ້ວຍການໃຫ້ຄຳອະທິບາຍຈະແຈ້ງ, ແລະ ມີຄວາມຊຳນານ ໃນການຖາມແບບໃຫ້ ຜູ້ຖືກຖາມຕ້ອງຄິດແບບວິເຄາະວິຈານ, ເຊັ່ນ ຖາມວ່າ : ເປັນຫຍັງ, ເຮັດແນວໃດ, ຄິດແນວໃດ, ໆລໆ...

ຄູຝຶກຍັງຕ້ອງເປັນທັງຜູ້ກະຕຸ້ນ ໃຫ້ຜູ້ເຂົ້າຮ່ວມອົບຮົມ ເປັນຜູ້ປະກອບຄວາມຮູ້ ແລະ ທັກສະ ໃຫ້ກັນແລະ ກັນໄດ້, ແລະ ກະຕຸ້ນໃຫ້ຜູ້ເຂົ້າຮ່ວມອົບຮົມ ປະເມີນຜົນຕົນເອງໄດ້ແບບສ້າງສັນ.

<u>ສິ່ງເສີມການຮຽນຮູ້ຈາກປະສົບການຂອງຜູ້ເຂົ້າຮ່ວມ :</u>

ການອົບຮົມ ບໍ່ແມ່ນ ການສອນຕາມທິດສະດີ ຫລື ຕາມຫລັກສູດ ເປັນລຳດັບ ຕາຍໂຕ.

ການອົບຮົມ ແມ່ນການຈັດໃຫ້ເກີດມີການຮຽນຮູ້ຈາກປະສົບການຕົວຈິງທີ່ມີ. ການອົບຮົມ ແມ່ນການເວົ້າເຖິງປະສົບການກ່ອນ ແລ້ວສົນທະນາກັນໃນທີ່ອົບຮົມ ລະຫວ່າງ ຜູ້ເຂົ້າຮ່ວມອົບຮົມເອງເພື່ອພັດທະນາ ຄວາມຮູ້ບົນພື້ນຖານ ປະສົບການ. ຄູຝຶກ ສະເໜີຄວາມຮູ້ທາງທິດສະດີ ດ້ວຍການເຮັດການບັນລະຍາຍໜ້ອຍທີ່ສຸດ, ຕັ້ງຄຳຖາມຫລາຍກວ່າ ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ຄົ້ນຄິດ ແບບວິເຄາະວິຈານຫລາຍ ເຊິ່ງມັນເປັນການພັດທະນາ ທັກສະ ການຄິດ ແລະ ການເບິ່ງບັນຫາຂອງເຂົາເຈົ້າ.

ການຄົ້ນຄວ້າ ເຫດການ ໃນຊີວິດຕົວຈິງ (ກໍລະນີສຶກສາ) ຕ້ອງ ເປັນການສົນທະນາກັນເອງ ຂອງຜູ້ເຂົ້າຮ່ວມທັງຫລາຍ, ພວກເຂົາເຈົ້າຕ້ອງສົນທະນາກັນເອງ ວ່າເປັນຫຍັງ ຈຶ່ງມີເຫດການ ແບບນັ້ນ, ແລະ ຈະແກ້ໃຂແນວໃດ, ມີທ່າແຮງ ແລະ ຂໍ້ຈຳກັດ ແນວໃດ, ແລະ ຈະແກ້ໃຂ ຂໍ້ຈຳກັດ ແນວໃດ, ຈະແກ້ໄດ້ຫລາຍປານໃດ. ຜູ້ເຂົ້າຮ່ວມຕ້ອງຕັ້ງໜ້າຮຽນຮູ້ ກັບຄຳຖາມ ທີ່ຍາກຂຶ້ນເລື້ອຍໆ ໃນເວລາສົນທະນາກໍລະນີສຶກສາ. ການທີ່ເຂົາເຈົ້າຄິດເຖິງປະສົບການແບບໃຊ້ຫົວຄິດປະດິດສ້າງ, ຄົ້ນຄິດຫາ

ຈຸດແຂງ, ຫາປະສົບການທີ່ມີ, ແລະ ທ່າແຮງ ຕ່າງໆ ຂອງແຕ່ລະກໍລະນີ ຈະແມ່ນສິ່ງທີ່ພາເຂົາເຈົ້າກ້າວໄປສູ່ ຜົນສຳເລັດ ແລະ ຄວາມກ້າວໜ້າ ໃນການຮຽນຮູ້ຈາກ ການຝຶກອົບຮົມ.

ຈັດການຝຶກອົບຮົມ ບົດບາດ ຍິງ-ຊາຍ ໃຫ້ໃຜ ?

ຄູ່ມືນີ້ ສ້າງຂຶ້ນຈາກປະສົບການໃນວຽກງານພັດທະນາຊຸມຊົນໃນເຂດຊົນນະບົດ ເປັນຕົ້ນຕໍ, ຫລາຍຕົວຢ່າງຂອງເຫດການຕົວຈິງໃນຊີວິດທີ່ນຳມາໃຫ້ຜູ້ເຂົ້າຮ່ວມໃຊ້ຝຶກແອບເຮັດການວິເຄາະ ແມ່ນ ມາຈາກວຽກງານພັດທະນາຊຸມຊົນ. ເຖິງແນວໃດ ກໍຕາມ ຜູ້ເຂົ້າຮ່ວມອົບຮົມ ສາມາດເປັນ ກຸ່ມຄົນມາຈາກພາກສ່ວນຕ່າງໆໄດ້, ຄູຝຶກຕ້ອງໝູນໃຊ້ໃຫ້ເໝາະສົມກັບປະເພດຄົນ ຜູ້ເຂົ້າຮ່ວມອົບຮົມ.

ໃຜ ເປັນຜູ້ນຳໃຊ້ ປຶ້ມຄູ່ມືນີ້ :

ປຶ້ມຄູ່ມືນີ້ ສ້າງຂຶ້ນເພື່ອ ຄູຝຶກ ເລື້ອງ ບົດບາດ ຍິງ-ຊາຍ. ຜູ້ຈະນຳໃຊ້ ຄວນເປັນພວກທີ່ມີຄວາມເຂົ້າໃຈດີ ໃນ ປັດຊະຍາ ຫລື ເລື້ອງ ບົດບາດ ຍິງ-ຊາຍ ມາກອ່ນ. ຈຸດປະສົງຂອງ ປຶ້ມຄູ່ມືນີ້ ແມ່ນ ເພື່ອປັບປຸງ ຄວາມຮູ້, ແລະ ສີມື ທີ່ຈະຕ້ອງຝຶກອົບຮົມ ໃຫ້ໄດ້ດີຂຶ້ນ, ດ້ວຍການເພີ່ມໃຫ້ມີ ວິທີການຝຶກ, ມີທິດສະດີ ແລະ ມີເຕັກນິກຕ່າງໆຫລາຍຂຶ້ນ.

ສາຍຕາ ຄູຝຶກອົບຮົມ ບົດບາດ ຍິງ-ຊາຍ :

ການຮຽນຮູ້ ເລື້ອງ ບົດບາດ ຍິງ-ຊາຍ ເພື່ອໄປນຳໃຊ້ໃນຊີວິດ, ໃນວຽກງານ ຂອງ ຜູ້ເຂົ້າຮ່ວມອົບຮົມບໍ່ແມ່ນ ການໄດ້ຮັບຄຳບອກສອນ ຫລື ຄຳແນະນຳສຳເລັດຮູບ ຈາກຄູຝຶກ, ແຕ່ການອົບຮົມ ແມ່ນການສ້າງ ຄວາມໝັ້ນໃຈ ໃຫ້ຜູ້ເຂົ້າຮ່ວມ ເພື່ອໃຫ້ພວກເຂົາເຈົ້າ ສາມາດ ວິເຄາະເລື້ອງທີ່ເຂົາເຈົ້າຈະປະເຊີນ ຕໍ່ໄປ ໃນແງ່ ບົດບາດ ຍິງ-ຊາຍ ແລະ ເຂົາເຈົ້າຈະສາມາດຮູ້ໄດ້ວ່າ ມັນມີສາເຫດມາຈາກປັດໃຈໃດ້, ມັນກະທົບ ໃສ່ ແມ່ຍິງ, ກະທົບໃສ່ ຜູ່ຊາຍ ແນວໃດ, ມັນມີຄວາມເປັນທຳແນວໃດ, ຄວາມເປັນແມ່ຍິງ ຖືກຍໍ່ຍີ ຫລື ຮັບຮູ້ແນວໃດ.

ຄູຝຶກ ບໍ່ແມ່ນ ນັກວາງ ທີ່ຈະກຳນົດຍຸດທະສາດ ເພື່ອເຮັດການປ່ຽນແປງໃດໜຶ່ງ ໃນເລື້ອງ ບົດບາດ ຍິງ-ຊາຍ ແລ້ວ ມອບໃຫ້ຜູ້ເຂົ້າຮັບອົບຮົມໄປນຳໃຊ້.

ເຖິງແນວໃດກໍດີ, ການເຮັດ ບໍ່ງ່າຍຄືການເວົ້າ, ມະນຸດ ຜູ້ເປັນ ຄູຝຶກ ກໍມັກຫລົງບົດບາດ ໃນ ການທີ່ຕ້ອງເປັນຜູ້ສ້າງຄວາມໜັ້ນໃຈໃຫ້ຜູ້ເຂົ້າຮ່ວມ, ຄູຝຶກມັກກາຍເປັນຄູສອນທີ່ໃຫ້ຫລາຍຄໍາຕອບແກ່ຜູ້ເຂົ້າຮ່ວມ. ດັ່ງນັ້ນ ຄູຝຶກ ຈໍາເປັນຕ້ອງຮູ້ຫລາຍເຕັກນິກ ແລະ ຂັ້ນຕອນ ທີ່ໃຊ້ສໍາລັບການປະກອບສ້າງຄວາມຮູ້ ແລະ ຄວາມໝັ້ນໃຈຂອງຜູ້ເຂົ້າຮ່ວມ.

ຫວັງວ່າ ຄູ່ມືນີ້ ຈະຊ່ວຍ ຄູຝຶກທັງຫລາຍ ໄດ້ສວ່ນໃດສ່ວນໜຶ່ງ ດ້ວຍການສະເໜີ ຂັ້ນຕອນ ການເຮັດກິດຈະກໍາຂອງແຕ່ລະຫົວຂໍ້ ດ້ວຍເຕັກນິກ ແລະ ວິທີການຕ່າງໆຈໍານວນໜຶ່ງ.

ຄໍາຄິດເຫັນຕ່າງໆຂອງທ່ານທັງຫລາຍ ທີ່ຕິຊົມ ເພື່ອປັບປຸງຄູ່ມືນີ້ ຈະເປັນກໍາລັງໃຈ ແລະ ພະລັງໃໝ່ສໍາລັບ ທີມງານ ພວກຂ້າພະເຈົ້າຜູ້ຮ່ວມກັນສ້າງ ຄູ່ມືນີ້ ເພື່ອພິຈະລະນາຕໍ່ໄປໃນການສ້າງ ຄູ່ມືອື່ນໆຕື່ມອີກ.

ພວກຂ້າພະເຈົ້າ ຂອບໃຈຢ່າງລົ້ນເຫລືອ ມາຍັງ ໂຄງການ UNIFEM CEDAW SEAP, ໂດຍສະເພາະຂອບໃຈຕໍ່ການຮ່ວມມືທີ່ດີງາມ, ທີ່ຈິງໃຈ ຂອງ ທ່ານ ສົມສຸກ ຊະນະນິກອນ, ຜູ້ປະສານງານໂຄງການປະຈໍາ ສປປ ລາວ ທີ່ຊ່ວຍເຮັດໃຫ້ການສ້າງ ຄູ່ມືນີ້ ມີຢູ່ໃນມືຂອງພວກຄູຝຶກ ບົດບາດຍິງ-ຊາຍ ແລະ ມີຢູ່ໃນສັງຄົມລາວເພື່ອຜົນປະໂຫຍດຂອງສັງຄົມລາວ.

ທີມງານ ຜູ້ສ້າງປຶ້ມຄູ່ມື :

ນີ ຫລວງໂຄດ
ນັກເສດຖະກິດ-ສັງຄົມສາດ
ທີ່ປຶກສາ, ຄູຝຶກ, ນັກສໍາຫລວດທາງສັງຄົມ
ໃນຂະແໜງການພັດທະນາຊຸມຊົນ

ມະນີວັນ ແສນຍາວົງ
ນັກພັດທະນາແບບມີສ່ວນຮ່ວມ

ອິນນະຄອນ ວໍຣະຈັກ
ນັກຊີວະສາດ, ນັກພັດທະນາແບບມີສ່ວນຮ່ວມ

# ສາລະບານ

ໜ້າ

**ຄຳແນະນຳ**

**ກິດຈະກຳການອົບຮົມ**

1. ການແນະນຳຕົວ 1-3
2. ຄວາມຫວັງຂອງຜູ້ເຂົ້າຮ່ວມອົບຮົມ 4-6
3. ຕາຕະລາງການອົບຮົມ 7-8
4. ກົດລະບຽບ 9-10
5. ເພດ ແລະ ບົດບາດ 11-12
6. ເກມ ເພດ ແລະ ບົດບາດ 13-14
7. ບົດບາດ ຍິງ-ຊາຍ ແບບໂບຮານ 15-17
8. ວຽກ 3 ບົດບາດ ຂອງ ແມ່ຍິງ ແລະ ຂອງ ຜູ້ຊາຍ 18-21
9. ຮາກກົກຮາກເຄົ້າທີ່ເປັນສາເຫດ ຂອງເລື້ອງ ບົດບາດ ຍິງ-ຊາຍ 22-24
10. ຄວາມສະເໝີພາບ ແລະ ຄວາມທ່ຽງທຳ ລະຫວ່າງ ຍິງ-ຊາຍ 25-26
11. ວິເຄາະກໍລະນີສຶກສາ 27-28
12. ປະເມີນຜົນ ການຝຶກອົບຮົມ 29-30

**ເອກະສານປະກອບກິດຈະກຳ:**

ກໍລະນີສຶກສາ 31-41

ເອກະສານແຈກ 42-55

## ກິດຈະກຳທີ່ 1: ການແນະນຳຕົວ

### ຈຸດປະສົງ:

- o ເພື່ອແນະນຳໃຫ້ຜູ້ເຂົ້າຮ່ວມຮູ້ຈັກກັນ;
- o ເພື່ອສ້າງຄວາມເຊື່ອໝັ້ນກັນ ແລະ ນັບຖືກັນ;
- o ເພື່ອດຶງເອົາປະສົບການທີ່ແຕກຕ່າງກັນໃນວຽກງານບົດບາດ ຍິງ-ຊາຍ ຂອງແຕ່ລະຄົນອອກມາສະເໜີ ຕໍ່ກັນ.

### ເຮັດຫຍັງ:

- o ຜູ້ເຂົ້າຮ່ວມແນະນຳຊື່ໂຕເອງ ແລະເວົ້າ ກ່ຽວກັບ ປະສົບການຂອງຕົນເອງໃນວຽກງານ ບົດບາດ ຍິງ ຊາຍ.

**ເວລາ:** 30 ນາທີ

### ອຸປະກອນ:

- o ເຈ້ຍແຜ່ນໃຫຍ່
- o ບິກເຟີດ
- o ສະກັອດ

### ເຮັດແນວໃດ:

1. ອະທິບາຍໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມວ່າມັນແມ່ນສິ່ງສຳຄັນທີ່ທຸກຄົນຕ້ອງຮູ້ຈັກກັນ ແລະ ສ້າງຄວາມ ເຊື່ອໝັ້ນກັນ ແລະ ນັບຖືກັນ ໃນທຸກມື້ຕໍ່ໆໄປນີ້ທີ່ຈະຢູ່ຮ່ວມກັນ;
2. ໃຫ້ແຕ່ລະຄົນຂຽນຊື່ຂອງໂຕເອງລົງໃນປ້າຍຊື່ຂອງໂຕເອງ ເພື່ອໃຫ້ຜູ້ອື່ນ ອ່ານຊື່ ຂອງພວກ ເຂົາເຈົ້າໄດ້;
3. ໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມຈັບຄູ່ກັນ ແລະ ແຕ່ລະຄູ່ ສຳພາດກັນ ຕາມຄຳຖາມ ທີ່ສະເໜີໃຫ້; ແຕ່ລະຄູ່ມີເວລາ 3 ນາທີເພື່ອ ຜັດປ່ຽນກັນ ແນະນຳໂຕເອງ;
4. ແຕ່ລະຄູ່ສະເໜີໃນກຸ່ມໃຫຍ່;
5. ຄູຝຶກ ຟັງການແນະນຳຂອງແຕ່ລະຄູ່, ປະສົບການຕ່າງໆທີ່ສະເໜີໃສ່ເຈ້ຍແຜ່ນໃຫຍ່;

6. ຫລັງຈາກທີ່ແຕ່ລະຄູ່ແນະນຳໂຕເອງແລ້ວ, ຄູຝຶກ ໃຫ້ຄຳເຫັນມ້ວນ ທ້າຍແບບສັ້ນໆວ່າ ທຸກຄົນຈະໄດ້ນຳເອົາປະສົບການ, ທັກສະ, ຄວາມຊ່ຽວຊານ ແລະ ສີ ມືໃນວິຊາຊີບທີ່ ຫລາກຫລາຍໃນເລື່ອງ ບົດບາດ ຍິງ-ຊາຍ ອອກມາສ້າງເປັນເນື້ອໃນຮ່ວມກັນ ໃນ ເວລາການຝຶກອົບຮົມ, ເພື່ອເຮັດໃຫ້ການຝຶກອົບຮົມໜ້າສົນໃຈ ແລະ ມີຊີວິດຊີວາ.

## ເອກະສານ 1: ການແນະນຳຕົວ ຂອງ ຜູ້ເຂົ້າຮ່ວມອົບຮົມ

ຄຳຖາມແນະນຳຕົວ ຂອງ ຜູ້ເຂົ້າຮ່ວມ:

1. ຊື່ ແລະ ນາມສະກຸນ
2. ມາຈາກພາກສ່ວນໃດ
3. ເຄີຍມີປະສົບການເລື້ອງບົດບາດ ຍິງ-ຊາຍ ແນວໃດມາກ່ອນ
4. ຖ້າ ບໍ່ເຄີຍປະສົບການມາກ່ອນ, ທ່ານ ຄິດວ່າ ເລື້ອງ ບົດບາດ ຍິງ-ຊາຍ ແມ່ນ ເລື້ອງຫຍັງ ?
5. ເວລາວ່າງມັກເຮັດຫຍັງຫລາຍກວ່າໝູ່, ເປັນຫຍັງ ?

## ກິດຈະກຳທີ 2: ຄວາມຄາດຫວັງ

**ຈຸດປະສົງ:**

- o ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ສະແດງຄວາມຫວັງ ຂອງເຂົາເຈົ້າໃນການຝຶກອົບຮົມຄັ້ງນີ້.
- o ເພື່ອຊ່ວຍໃຫ້ຄູຝຶກໄດ້ປັບເນື້ອໃນໃຫ້ເຂົ້າກັບຄວາມຕ້ອງການຂອງຜູ້ເຂົ້າຮ່ວມ, ຖ້າຈຳເປັນ.
- o ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ມີແນວຄິດທີ່ຈະແຈ້ງ ກ່ຽວກັບຈຸດປະສົງຂອງການຝຶກອົບຮົມ.

**ເຮັດຫຍັງ:**

- o ຜູ້ເຂົ້າຮ່ວມບອກວ່າເຂົາເຈົ້າຕ້ອງການຮຽນຮູ້ຫຍັງແດ່ ໃນການຝຶກອົບຮົມນີ້ ແລະ ພວກເຂົາເຈົ້າຫວັງວ່າຈະໄດ້ບັນລຸຫຍັງແດ່ ຫລັງຈາກຈົບການຝຶກອົບຮົມ.

**ເວລາ:** 30 ນາທີ

- o ຜູ້ເຂົ້າຮ່ວມມີເວລາ 10 ນາທີໃນການກຽມ;
- o ຄູຝຶກມີ ເວລາ 20 ນາທີ ໃນການວິເຄາະ ແລະ ນຳສະເໜີເນື້ອໃນການຝຶກອົບຮົມ.

**ອຸປະກອນ:**

- o ເຈ້ຍສີ;
- o ປາກກາເຟີດ;
- o ສະກ໊ອດ;
- o ມີດຕັດ;
- o ເຈ້ຍແຜ່ນໃຫຍ່

**ເຮັດແນວໃດ:**

1. ກ່ອນເລີ່ມການຝຶກອົບຮົມ, ທ່ານຕ້ອງກຽມເຈ້ຍແຜ່ນນ້ອຍໄວ້ຫລາຍໆສີ;
2. ຢາຍເຈ້ຍສີໃຫ້ແຕ່ລະຄົນແລ້ວໃຫ້ພວກເຂົາເຈົ້າຂຽນຄວາມຫວັງຂອງພວກເຂົາເຈົ້າລົງໃນເຈ້ຍສີນັ້ນ;
3. ໃຫ້ເວລາຜູ້ເຂົ້າຮ່ວມຂຽນ 5 ນາທີ;
4. ເກັບເຈ້ຍທັງໝົດມາຕິດໃສ່ກະດານ ແລະ ແຍກຫົວຂໍ້ທີ່ຄ້າຍຄືກັນໃສ່ໃນໝວດດຽວ,

ຕົວຢ່າງ: ຄວາມຫວັງໃນດ້ານຄວາມຮູ້, ທັກສະຄວາມຊຳນານ, ແລະ ທັດສະນະ ໆລໆ.

5. ເບິ່ງໄປແຕ່ລະຫົວຂໍ້ ແລະ ອະທິບາຍວ່າເນື້ອໃນ ການຝຶກອົບຮົມ ແມ່ນໄດ້ ອອກ ແບບ ມາເວົ້າ ກ່ຽວກັບ ບັນຫາເລົ່ານີ້, ຫລັງຈາກນັ້ນຄູຝຶກສະໜີຈຸດປະສົງຂອງການຝຶກອົບຮົມ.
6. ໃນຂະນະທີ່ສະເໜີລາຍລະອຽດຂອງຈຸດປະສົງ, ຄູຝຶກ ຄວນພະຍາຍາມ ເຊື່ອມໂຍງໃສ່ກັບຄວາມຫວັງຂອງຜູ້ເຂົ້າຮ່ວມ.
7. ສຸດທ້າຍໃຫ້ເນັ້ນໜັກວ່າ ຜູ້ເຂົ້າຮ່ວມເປັນຜູ້ມີບົດບາດສຳຄັນ ໃນການຝຶກອົບຮົມນີ້ ໂດຍສະເພາະ ພວກເຂົາເຈົ້າຕ້ອງຫ້າວຫັນໃນການສົນທະນາໃນ ກຸ່ມໃຫຍ່ ແລະ ກຸ່ມກຸ່ມຍ່ອຍ ເພື່ອຮ່ວມແບ່ງປັນປະສົບການນຳກັນ ແລະ ຍັງຕ້ອງເຮັດໜ້າທີ່ເປັນຄູຝຶກຮ່ວມກັນອີກດ້ວຍ.

## ເອກະສານ 2: ຈຸດປະສົງຂອງການຝຶກອົບຮົມ

### ຈຸດປະສົງລວມ:

- ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມມີ ຄວາມຮູ້, ທັກສະ ແລະ ມີທັດສະນະ ໃນເລື້ອງບົດບາດ ຍິງ-ຊາຍ.

### ຈຸດປະສົງສະເພາະ :

1. ເພື່ອຊ່ວຍ ໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມ ໄດ້ຮັບຄວາມຮູ້ຂັ້ນພື້ນຖານ ໃນແຕ່ລະຫົວຂໍ້ຂອງປັດຊະຍາເລື່ອງ ບົດບາດ ຍິງ-ຊາຍ.
2. ເພື່ອສ້າງທັກສະຂອງຜູ້ເຂົ້າຮ່ວມ ໃນການວິເຄາະຫົວຂໍ້ທັງຫຼາຍ ໃນປັດຊະຍາ ເລື່ອງບົດບາດ ຍິງ-ຊາຍ;
3. ເພື່ອຊ່ວຍສ້າງທັກສະຂອງຜູ້ເຂົ້າຮ່ວມ ໃນການວິເຄາະ ເຫດການຕົວຈິງທີ່ມີຢູ່ໃນຊີວິດຂອງສັງຄົມ, ວິເຄາະໂດຍມີ ປັດຊະຍາເລື່ອງບົດບາດ ຍິງ-ຊາຍ ເປັນຈຸດຢືນ;
4. ເພື່ອກຳນົດແຜນການສະເພາະບຸກຄົນ ຫລັງຈາກການຮຽນຮູ້ ຈາກ ການຝຶກອົບຮົມຄັ້ງນີ້;

### ວິທີການຝຶກອົບຮົມ :

1. ວິທີການທີ່ເລີ່ມຈາກຄວາມຮູ້, ຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມອົບຮົມ ກ່ອນແລ້ວຈິ່ງ ໃຫ້ຂໍ້ມູນໃນປັດຊະຍາ ບົດບາດ ຍິງ-ຊາຍ ;
2. ວິທີການ ລະດົມສະໝອງ, ຈັດກຸ່ມສົນທະນາ ແບບ ຮ່ວມຮຽນຮູ້ ນຳກັນ ແລະ ກັນ ລະຫວ່າງຜູ້ຮ່ວມອົບຮົມ;
3. ໃຊ້ກໍລະນີສຶກສາ ໃຫ້ຄົ້ນຄວ້າຮ່ວມກັນ
4. ໃຊ້ເກມຫລິ້ນ ບາງຢ່າງ ເພື່ອປະກອບໃສ່ຂັ້ນຕອນການປະກອບສ້າງຄວາມຮູ້ ກ່ຽວກັບ ປັດຊະຍາ ບົດບາດ ຍິງ-ຊາຍ;

## ກິດຈະກຳ 3: ສະເໜີ ຕາຕະລາງ ການຝຶກອົບຮົມ

## ຈຸດປະສົງ :

- o ເພື່ອໃຫ້ຜູ້ຮ່ວມອົບຮົມ ຮູ້ວ່າ ມີຂັ້ນຕອນການອົບຮົມແນວໃດ, ໃຊ້ເວລາແນວໃດ;
- o ເພື່ອໃຫ້ ຜູ້ຮ່ວມອົບຮົມ ຮູ້ລ່ວງໜ້າວ່າຈະມີວຽກ ການອົບຮົມ ຫລາຍປານໃດ ແຕ່ລະມື້;

## ເຮັດຫຍັງ :

- o ສະເໜີຕາຕະລາງການອົບຮົມ ທີ່ກະກຽມໄວ້ລ່ວງໜ້າ

**ເວລາ :** 5 ນາທີ

## ອຸປະກອນ :

- o **ເຈັ້ຍໃຫຍ່**
- o **ບິກເຟີດ**
- o **ສະກອັດ**

## ເຮັດແນວໃດ :

1. **ຄູຝຶກຕິດເຈັ້ຍຕາຕະລາງການອົບຮົມໃສ່ກະດານ ແລ້ວສະເໜີ ແຕ່ລະຂັ້ນຕອນ**

## ເອກະສານ 3 :     ຕາຕະລາງ ການອົບຮົມ

ໃນຕາຕະລາງການອົບຮົມ ຕ້ອງແຈ້ງຫົວຂໍ້ ຈະອົບຮົມ ເປັນຕົ້ນຕໍ, ແລ້ວຈຶ່ງຍ່ອຍເປັນຫົວຂໍ້ແຕ່ລະມື້, ແລ້ວຍ່ອຍ ເປັນຕອນພາກເຊົ້າ, ພາກບ່າຍ, ແລະ ແລງ (ຖ້າມີ) .

ຫົວຂໍ້ອົບຮົມ ບົດບາດ ຍິງ-ຊາຍ ໃນປຶ້ມຄູ່ມືນີ້ ມີ :

- ເພດ ແລະ ບົດບາດ ຍິງ-ຊາຍ
- ບົດບາດ ຍິງ-ຊາຍ ດຶກດຳບັນ
- ວຽກ 3 ບົດບາດ ຂອງ ຍິງ-ຊາຍ
- ຮາກເຫງົ້າສາເຫດຂອງ ບົດບາດ ຍິງ-ຊາຍ
- ສິດສະເໝີພາບ ລະຫວ່າງ ບົດບາດ ຍິງ-ຊາຍ ແລະ ຄວາມເປັນທຳ ລະຫວ່າງ ຍິງ ແລະ ຊາຍ
- ກໍລະນີ ສຶກສາ ເຫດການ ຈາກຊີວິດຕົວຈິງ

## ກິດຈະກຳທີ 4: ກຳນົດ ກົດລະບຽບຮ່ວມກັນ

### ຈຸດປະສົງ:

- ເພື່ອສ້າງ ຄວາມເຂົ້າໃຈເປັນເອກະພາບ ແລະ ສ້າງກົດລະບຽບແບບງ່າຍໆຮ່ວມກັນ ໃນລະຫວ່າງການຝຶກອົບຮົມ

### ເຮັດຫຍັງ:

- ໃຫ້ຜູ້ເຂົ້າຮ່ວມສະເໜີ ກົດລະບຽບທີ່ຄວນມີໃນກຸ່ມ ໃນລະຫວ່າງການຝຶກອົບຮົມໃນ ໄລຍະ 3 ມື້ ແລະ ເນັ້ນໜັກວ່າ ກົດລະບຽບນັ້ນຕ້ອງສ້າງຂຶ້ນໂດຍຜູ້ເຂົ້າຮ່ວມຝຶກອົບຮົມເອງ.

**ເວລາ:** 10 ນາທີ

### ອຸປະກອນ:

- ເຈ້ຍແຜ່ນໃຫຍ່
- ບິກເຟີດ
- ສະກອັດ

### ເຮັດແນວໃດ:

1. ອະທິບາຍໃຫ້ຜູ້ເຂົ້າຮ່ວມຝຶກອົບຮົມເຂົ້າໃຈວ່າ ໃນເວລາ 3 ມື້ ຂອງການອົບຮົມນີ້ ທຸກຄົນເຫັນຈາກຕາຕະລາງ ທີ່ສະເໜີແລ້ວວ່າ ຈະມີຫລາຍຫົວຂໍ້ ແລະ ຫລາຍຂັ້ນຕອນ ທີ່ຕ້ອງດຳເນີນໃຫ້ສຳເລັດ, ດັ່ງນັ້ນ ຈຳເປັນຕ້ອງມີການຕົກລົງກັນວ່າ ຕ້ອງມີລະບຽບອັນໃດແດ່ ເພື່ອຮ່ວມກັນດຳເນີນການອົບຮົມໃຫ້ສຳເລັດພາຍໃນເວລາທີ່ວາງແຜນໄວ້.
2. ສະເໜີໃຫ້ແຕ່ລະຄົນບອກກົດລະບຽບທີ່ຕ້ອງການ;
3. ຂຽນກົດລະບຽບໃສ່ເຈ້ຍແຜ່ນໃຫຍ່;
4. ຄູຝຶກສະເໜີບາງກົດລະບຽບຕື່ມອີກ, ຖ້າວ່າຜູ້ເຂົ້າຝຶກອົບຮົມບໍ່ທັນສະເໜີ;
5. ອ່ານຄືນ ກົດລະບຽບ ທີ່ຂຽນໄວ້, ແລ້ວຍ້າຍເຈ້ຍໄປຕິດໄວ້ຝາບ່ອນທີ່ທຸກຄົນເຫັນໄດ້ງ່າຍ.

**ເອກະສານ 4 :** ກົດລະບຽບ ສຳລັບຜູ້ເຂົ້າຮ່ວມຝຶກອົບຮົມ

ຢູ່ແຕ່ລະຫ້ອງຮຽນ, ຜູ້ເຂົ້າຮ່ວມຍ່ອມບອກໄດ້ ກົດລະບຽບຕ່າງໆ ຕາມທີ່ເຂົາເຈົ້າຕ້ອງການ. ຄູຝຶກຄວນເອົາໃຈໃສ່ວ່າມີກົດລະບຽບທີ່ຈຳເປັນບໍ່ເຊັ່ນ :

- ກຳນົດເວລາ, ສະຖານທີ່
- ກຳນົດໃຫ້ມອດໂທລະສັບມືຖື
- ບໍ່ສູບຢາໃນສະຖານທີ່ຝຶກອົບຮົມ;
- ບໍ່ບົນແຊວລົບກວນຜູ້ອື່ນ ໃນເວລາເຮັດວຽກໃນກຸ່ມໃຫຍ່ ແລະ ກຸ່ມຍ່ອຍ
- ທຸກຄຳຄິດເຫັນມີຄຸນຄ່າ, ບໍ່ມີຄຳເຫັນໃດຜິດ
- ໝົດທຸກຄົນຕ້ອງອອກຄຳເຫັນ
- ບໍ່ຄອບງຳກັນ
- ຯລຯ..............

## ກິດຈະກຳ 5 : ເພດ ແລະ ບົດບາດ

**ຈຸດປະສົງ:**

- ເພື່ອໃຫ້ຜູ້ເຂົ້າຮ່ວມຮູ້ ຄວາມໝາຍຂອງຄຳວ່າ ເພດ ແລະຄຳວ່າ ບົດບາດ ຍິງ-ຊາຍ
- ເພື່ອໃຫ້ຜູ້ເຂົ້າຮ່ວມ ສາມາດວິເຄາະໄດ້ ວ່າອັນໃດແມ່ນ ເພດ ແລະ ອັນໃດແມ່ນບົດບາດຍິງ-ຊາຍ

**ເຮັດຫຍັງ:**

- ກຸ່ມຍ່ອຍ ຍິງ, ຊາຍ ຄົ້ນຄວ້າ
- ສະເໜີໃນກຸ່ມໃຫຍ່

**ເວລາ:** 60 ນາທີ

**ອຸປະກອນ:**

- ເຈ້ຍແຜ່ນໃຫຍ່
- ບິກເຟີດ
- ສະກອັດ

**ເຮັດແນວໃດ:**

1. ແບ່ງ ກຸ່ມຍິງ ແລະ ກຸ່ມຊາຍ ເພື່ອຄົ້ນຄວ້າ ຕາມຄຳຖາມ.
   ຄຳຖາມ ສຳລັບ ກຸ່ມ ຍິງ "ເມື່ອໄດ້ຍິນ ຄຳວ່າ ຜູ້ຊາຍ ທ່ານຮູ້ສຶກແນວໃດ ? ";
   ຄຳຖາມ ສຳລັບ ກຸ່ມຊາຍ "ເມື່ອໄດ້ຍິນ ຄຳວ່າ ແມ່ຍິງ ທ່ານຮູ້ສຶກແນວໃດ ? "
   ຄຳຖາມ ສຳລັບ ກຸ່ມ ປະສົມຍິງຊາຍ "ຍິງ ແລະ ຊາຍ ມີຫຍັງຄືກັນ ແລະ ມີຫຍັງຕ່າງກັນ ?"
2. ໃຫ້ມີອາສາສະໝັກໜຶ່ງຄົນ ເພື່ອເປັນຜູ້ນຳພາກຸ່ມຄົ້ນຄ້ວາ ແລະ ລະດົມສະໝອງ
3. ແຕ່ລະກຸ່ມຍ່ອຍສະເໜີໃນກຸ່ມໃຫຍ່;
4. ຄູຝຶກລະດົມສະໝອງຜູ້ເຂົ້າຮ່ວມໃນກຸ່ມໃຫຍ່ ວ່າມີອັນໃດແດ່ ທີ່ເຮັດ ໃຫ້ ແມ່ຍິງ ແລະ ຜູ້ຊາຍ ແຕກຕ່າງກັນ; ຂຽນຄຳຕອບໃສ່ເຈ້ຍໃຫຍ່;
5. ຄູຝຶກສັງລວມຄຳຕອບ ແລະ ສະຫລຸບເພື່ອໃຫ້ຜູ້ເຂົ້າຮ່ວມສາມາດແຍກໄດ້ວ່າ : ອັນໃດແມ່ນ ເພດ ແລະ ອັນໃດ ແມ່ນ ບົດບາດ ຍິງ-ຊາຍ

## ເອກະສານ 5 : ເພດ ແລະ ບົດບາດ ແມ່ນຫຍັງ ?

- **ເພດ:** ແມ່ນລັກສະນະທາງຮ່າງກາຍ ທາງຊີວະວິທິຍາຂອງແມ່ຍິງ ແລະ ຜູ້ຊາຍ ເປັນສິ່ງຕາຍໂຕ (ທີ່ປ່ຽນແປງບໍ່ໄດ້) ເປັນສິ່ງທີ່ທຳມະຊາດສ້າງຂຶ້ນມາ ແລະ ບໍ່ໄດ້ຮັບອິດທິພົນມາຈາກປັດໃຈໃດໆທາງສັງຄົມ.

- **ບົດບາດ** ແມ່ນ ສິດທິ ແລະ ພັນທະ (ສ່ວນຫລາຍມັກເວົ້າວ່າ ສິດທິ ແລະ ໜ້າທີ່).

- **ບົດບາດຍິງ–ຊາຍ:** ແມ່ນສັງຄົມກຳນົດ (ດ້ວຍມະນຸດເອງ) ແລະ ແມ່ນຄວາມຄາດຫວັງຂອງສັງຄົມທີ່ມີຕໍ່ມະນຸດໂດຍອີງຕາມ ເພດ ແລະ ປັດໃຈອື່ນໆເຊັ່ນວ່າ: ເຊື້ອຊາດ, ຊົນ ຊັ້ນ, ສໍາອາຍຸ ໆລໆ; ເປັນສິ່ງທີ່ບໍ່ຕາຍໂຕ (ປ່ຽນແປງໄດ້) ແຕ່ຍ້ອນມີການກຳນົດມາແຕ່ດົນນານແລ້ວ ມະນຸດຈຶ່ງຄິດວ່າບໍ່ສາມາດປ່ຽນແປງໄດ້.

- ສັງຄົມໃຊ້ ຮີດຄອງປະເພນີ, ນະໂຍບາຍ, ກົດລະບຽບ, ກົດໝາຍຕ່າງໆ, ຄວາມເຊື່ອຕ່າງໆ, ສາດສະໜາ, ເປັນເຄື່ອງມືກຳນົດໃຫ້ບົດບາດຍອງ ຍິງ-ຊາຍ ແຕກຕ່າງກັນ; ໃນທີ່ສຸດສັງຄົມກໍມີຄວາມຫວັງຕໍ່ ຍິງ ຕໍ່ຊາຍ ຕ່າງກັນ, ປະຕິບັດຕໍ່ຍິງ ຕໍ່ຊາຍຕ່າງກັນ, ຍອມຮັບ ຍິງ ແລະ ຊາຍ ຕ່າງກັນ; ໃຫ້ຄ່າ ຕໍ່ ຍິງ ແລະ ຊາຍ ຕ່າງກັນ, ໃຫ້ສັນຍາລັກ ແກ່ຍິງ ແລະ ຊາຍ ຕ່າງກັນ;

- ຍ້ອນມີການກຳນົດຄວາມແຕກຕ່າງກັນຕໍ່ແມ່ຍິງ ແລະ ຜູ່ຊາຍ, ຜູ່ຊາຍ ແລະ ແມ່ຍິງ ຈຶ່ງມີບົດບາດ (ມີສິດ ແລະ ພັນທະ) ທີ່ແຕກຕ່າງກັນຢູ່ໃນສັງຄົມ.

## ກິດຈະກຳ 6 : ເກມຫລິ້ນ "ເພດ ແລະ ບົດບາດ"

**ຈຸດປະສົງ :**

- ເພື່ອທົບທວນຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມ ວ່າເຂົ້າໃຈຫລາຍໜ້ອຍປານໃດ

**ເຮັດຫຍັງ :**

- ກະກຽມ ປະໂຫຍກຄຳເວົ້າ ກ່ຽວກັບ ເພດ ແລະ ບົດບາດ ປະມານ 10 ຫາ 15 ຂໍ້

**ເວລາ :** 15 ນາທີ

**ອຸປະກອນ :**

- ເຈ້ຍ A 4 ທີ່ໄດ້ກະກຽມ ປະໂຫຍກຄຳເວົ້າ ຂອງເກມ ໄວ້ລ່ວງໜ້າ
- ບິກເຟີດ
- ສະກອັດ
- ເອກະສານແຈກ 1
- ເອກະສານ ປະໂຫຍກ ຫລິ້ນເກມ

**ເຮັດແນວໃດ:**

1. ຢາຍເອກະສານໃຫ້ຜູ້ຂົ້າຮ່ວມແຕ່ລະຄົນ ແລະ ອະທິບາຍວິທີການເຮັດ ໂດຍໃຫ້ອ່ານ ປະໂຫຍກທີ່ໄດ້ຢາຍໃຫ້ແລ້ວ ຕອບໃສ່ຫົວແຖວ ວ່າອັນໃດແມ່ນ ເພດ ໃຫ້ໝາຍ (ພ) ອັນໃດແມ່ນບົດບາດ ໃຫ້ໝາຍ (ບ)

2. ຫລັງຈາກທີ່ຜູ່ເຂົ້າຮ່ວມແຕ່ລະຄົນຕອບ ໃສ່ເຈ້ຍຂອງໃຜມັນແລ້ວ ຄູຝຶກພາ ກວດແກ້ ວ່າ ອັນໃດແມ່ນ ເພດ ແລະ ບົດບາດ, ເຊິ່ງທັງໝົດທຸກຄົນອາດຈະບໍ່ຕອບຄືກັນໝົດທຸກຂໍ້, ແລ້ວໃຫ້ ເຂົາເຈົ້າ ອະທິບາຍວ່າ ເປັນຫຍັງ ຈຶ່ງໃສ່ ເພດ ຫລື ບົດບາດ.

3. ສຸດທ້າຍຢາຍເອກະສານແຈກ 1 ໃຫ້ຜູ້ເຂົ້າຮ່ວມ ອ່ານເພີ່ມເຕີມອີກ.

## ເອກະສານ 6: ອັນໃດ ແມ່ນ ເພດ, ອັນໃດ ແມ່ນ ບົດບາດ

**ເກມ**: ອັນໃດແມ່ນ **ບ** (ບົດບາດຍິງ-ຊາຍ) ແລະ ອັນໃດແມ່ນ **ພ** (ເພດ ຍິງ, ເພດ ຊາຍ)
**ວິທີຫຼິ້ນ**: ໃຫ້ໃສ່ຕົວອັກສອນ **ບ** ຫຼື **ພ** ໃສ່ທ້າຍປະໂຫຍກແຕ່ລະຂໍ້ທີ່ມີຢູ່ລຸ່ມນີ້:

1. ແມ່ຍິງເກີດລູກໄດ້, ຜູ້ຊາຍເກີດລູກບໍ່ໄດ້.
2. ລູກສາວໜ້າຮັກກວ່າ, ລູກຊາຍຂີ້ດື້ກວ່າ.
3. ມີລູກສາວຄົນໜຶ່ງທີ່ພໍ່ແມ່ສອນ ໃຫ້ເປັນຄົນຂີ້ດື້ຄືຜູ້ຊາຍ, ຍ້ອນແນວນີ້ ລາວຈຶ່ງຮຽນເກັ່ງ ແລະ ໄດ້ຊະນະເລີດໃນການແຂ່ງຂັນຕ່າງໆໃນໂຮງຮຽນ.
4. ຢູ່ຫຼາຍປະເທດ ຄ່າແຮງງານຂອງແມ່ຍິງຖືກຕີລາຄາໃຫ້ເປັນພຽງ 40-60% ຂອງຄ່າແຮງງານທີ່ເປັນວຽກແບບດຽວກັບຜູ້ຊາຍເຮັດ.
5. ແມ່ຍິງລ້ຽງລູກດ້ວຍເຕົ້ານົມທຳມະຊາດ, ຜູ້ຊາຍລ້ຽງລູກດ້ວຍເຕົ້ານົມທຽມ.
6. ແມ່ຍິງມີເຕົ້ານົມທຳມະຊາດ, ຜູ້ຊາຍບໍ່ມີເຕົ້ານົມທຳມະຊາດເພື່ອລ້ຽງລູກ.
7. ວຽກຂັບຍົນແມ່ນວຽກຂອງຜູ້ຊາຍ.
8. ແມ່ຍິງຕ້ອງຢູ່ກັບຢ້າວເຝົ້າກັບເຮືອນ, ຜູ້ຊາຍຕ້ອງມີໜ້າມີຕາໃນສັງຄົມ.
9. ຕອນຊອນບ່າວ ຜູ້ຊາຍປ່ຽນສຽງນ້ຳນົມ, ແມ່ຍິງບໍ່ມີເລື້ອງແບບນີ້.
10. ວຽກເຮືອນການຊານແມ່ນວຽກແມ່ຍິງ, ວຽກບ້ານວຽກເມືອງ ແມ່ນວຽກຜູ້ຊາຍ.
11. ຜູ້ຊາຍເປັນພໍ່ເຮືອນ ຈະເຮັດຈະສ້າງອັນໃດກໍ່ຖາມຜູ້ຊາຍກ່ອນ.
12. ຜູ້ຊາຍມີນິໃສຮຸນແຮງໄດ້, ແຕ່ ແມ່ຍິງ ຕ້ອງມີນິໃສນິ້ມນວນ.
13. ແມ່ຍິງ ເຮັດວຽກບໍລິການດີກວ່າຜູ້ຊາຍເຊັ່ນ: ວຽກເລຂາ, ວຽກເສີບນ້ຳ, ວຽກເສີບອາຫານ, ວຽກຮັບແຂກ.

## ກິດຈະກຳ 7 : ບົດບາດ ຍິງ-ຊາຍ ແບບໂບຮານ (ແຕ່ດຶກດຳບັນ)

## ຈຸດປະສົງ:

- ເພື່ອໃຫ້ຜູ້ເຂົ້າຮ່ວມອົບຮົມເຂົ້າໃຈ ເລື່ອງບົດບາດ ຍິງ-ຊາຍ ແບບໂບຮານ, ທີ່ນຳໃຊ້ ຄຳສຸພາສິດ ໃນການສິດສອນ ແມ່ຍິງ ແລະ ຜູ່ຊາຍ;
- ເພື່ອໃຫ້ຜູ້ເຂົ້າຮ່ວມອົບຮົມ ວິເຄາະອິດທິພົນຂອງຄຳສຸພາສິດໂບຮານ ທີ່ຕົກທອດມາຮອດສັງຄົມປັດຈຸບັນ;
- ເພື່ອໃຫ້ຜູ້ເຂົ້າຮ່ວມອົບຮົມ ວິເຄາະສັງຄົມແຕ່ດຶກດຳບັນ ສອນ ໃຫ້ຮູ້ສິດທິແນວໃດ ຂອງແມ່ຍິງ.

## ເຮັດຫຍັງ :

- ແບ່ງກຸ່ມ ຍິງ, ຊາຍ ຄົ້ນຄວ້າ ຄຳສຸພາສິດໂບຮານ

## ເວລາ: 2 ຊົ່ວໂມງ ເຄິ່ງ

## ອຸປະກອນ:

- ເອກະສານແຈກ 2 “ຄຳສຸພາສິດຮານ”
- ບິກເຟີດ
- ເຈັ້ຍແຜ່ນໃຫຍ່
- ສະກອັດ

## ເຮັດແນວໃດ:

1. ຢາຍເອກະສານ ຄຳສຸພາສິດ ທີ່ກະກຽມໄວ້ນັ້ນ ໃຫ້ແຕ່ລະກຸ່ມສົນທະນາກັນ
2. ອະທິບາຍໃຫ້ຜູ້ເຂົ້າຮ່ວມ ຄົ້ນຄວ້າ ແລະ ສົນທະນາຕາມຄຳຖາມດັ່ງນີ້ :

   (1) ຄຳສຸພາສິດສອນຫຍັງ ?

   (2) ຄຳສຸພາສິດສອນໃຫ້ຮູ້ສິດຂອງແມ່ຍິງ ບໍ່?

(3) ຄຳສຸພາສິດຍັງມີອິດທິພົນ ໃນສັງຄົມປັດຈຸບັນ ບໍ່ ? ອະທິບາຍ ຄຳຕອບ ແລະ ຍົກຕົວຢ່າງ ອອກມາ ?

3. ກຸ່ມຍ່ອຍ ສົນທະນາກັນ
4. ກຸ່ມຍ່ອຍ ສະເໜີ ໃນກຸ່ມໃຫຍ່;
5. ຫລັງຈາກນັ້ນ ຄູຝຶກ ພາ ອະທິບາຍ ແຕ່ລະຄຳສຸພາສິດ ເພື່ອໃຫ້ຜູ່ເຂົ້າຮ່ວມເຂົ້າໃຈຄຳສຸພາສິດ ແລະ ອິດທິພົນຂອງ ຄຳສຸພາສິດ;

## ເອກະສານ 7: ສຸພາສິດລາວໂບຮານ

ຄຳສອນ ທີ່ສັງຄົມດຶກດຳບັນ ໃຊ້ສອນສັງຄົມໃຫ້ຮູ້ ກ່ຽວກັບ ແມ່ຍິງ ແລະ ຜູ້ຊາຍ, ຍັງຕົກທອດມາເຖິງສັງຄົມປັດຈຸບັນ

1. ເປັນຍິງນີ້ ໃຫ້ທຳຊົງຄືນົກເຈົ່າ ບາດວ່າບິນຂຶ້ນຟ້າ ໃຫ້ຂາວແຈ້ງດັ່ງພະຈັນ.
2. ຜົວເປັນເພັຽ ຍ້ອນເມັຽຊ່າງຮູ້
3. ແຫວນງາມຍ້ອນຫົວ ຜົວດີຍ້ອນເມັຽ.
4. ຜົວເປັນຊ້າງເທົ້າໜ້າ, ເມັຍເປັນຊ້າງເທົ້າຫຼັງ.
5. ອັນວ່າ ຍິງ-ຍິງ ນີ້ ມີຫຼາຍຢ່າງ, ຍິງບໍ່ເຮັດບໍ່ສ້າງ ບໍ່ເອີ້ນວ່າ ແມ່ຍິງ.

6. ເປັນຍິງນີ້ ຕ້ອງທຳພຽນດຸໝັ່ນ, ຂວ້າມມືໃຫ້ເປັນລາຍ, ຫງາຍມືໃຫ້ເປັນດອກ.
7. ຍິງບໍ່ມີຜົວນີ້ ຄືແຫວນຫົວເປົ່າ ພອຍບໍ່ມີຢູ່ຄ້າງເຂົາຊິເອີ້ນວ່າກົ່ວຊືນ.
8. ໄດ້ເມັຽບິດເບືອນ ປານກຸມໝູໃນຄອກ ໄດ້ເມັຽ ປອກລອກປານແກ່ໄມ້ທາງປາຍ.
9. ເບິ່ງຊ້າງໃຫ້ເບິ່ງຫາງ, ເບິ່ງນາງໃຫ້ເບິ່ງແມ່.
10. ສິນສົມສ້າງ ອາຄານສັບພະສິ່ງ ມອບໃຫ້ເມຍ ມັ່ງນໄວ້ໃນຢ້າວຈິ່ງແມ່ນຄອງ.

11. ໃຫ້ຜົວພາເມັຽສ້າງນາສວນປູກຫວ່ານ ພາເມັຽເປັນແມ່ບ້ານຄອງຢ້າວຢູ່ດີ.
12. ຊາຍໃຫ້ເປັນຊາຍແທ້ ຢ່າເປັນຊາຍປີນຫີນແຮ່, ຊາຍໃຫ້ເປັນຊາຍແທ້ ຫີນນັ້ນຢ່າໃຫ້ມີ.
13. ໄດ້ເມັຽດີປານໄດ້ແກ້ວຄູນລ່າງ, ໄດ້ເມັຽຊ່າງປານໄດ້ແກ້ວຄູນເຮືອນ.
14. ຍິງໃດ ມີ 2 ຊ້ອນ ຄອງເມືອງເພິ່ນບໍ່ກວ່າ, ຊາຍໄດ້ມີ 5 ຊ້ອນ ຫາໄດ້ໃຫ້ຮີບເອົາ.
15. ຍິງບໍ່ມີຜົວນີ້ ຄື ເຮືອນບໍ່ມີສີໜ້າ ກາບິນມາກໍ່ຊິລ່ວງ ຄືດັ່ງ ຝາກະຕ່າຮ້າງກາງ ບ້ານ ເກືອກຂີ້ຕົມ.

16. ຄຸນພໍ່ທໍ່ພູເຂົາກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ
17. ເສັຍແມ່ ແພແຕກ ເສັຍພໍ່ ທໍແຕກ
18. ໄດ້ລູກນີ້ ປານໄດ້ເຊືອກຜູກຄໍ ໄດ້ຜົວນີ້ ປານໄດ້ປໍຜູກສອກ
19. ໄດ້ຜົວປານໄດ້ຂ້ອຍ ໄດ້ລູກນ້ອຍ ປານໄດ້ນັ່ງເມືອງ
20. ລູກຜູ້ຊາຍ ລາຍມືເປັນຂຸມຊັບ

## ກິດຈະກຳ 8 : ວຽກ 3 ບົດບາດ ຂອງແມ່ຍິງ ແລະ ຂອງ ຜູ້ຊາຍ ໃນສັງຄົມໂບຮານ

### ຈຸດປະສົງ:

- ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດວິເຄາະ ວຽກ 3 ບົດບາດ ຂອງ ຍິງ-ຊາຍ ໃນສັງຄົມໂບຮານ
- ເພື່ອໃຫ້ຜູ້ເຂົ້າຮ່ວມສາມາດວິເຄາະອິດທິພົນຂອງການແບ່ງ ວຽກ 3 ບົດບາດໃນສັງຄົມໂບຮານ ທີ່ເປັນ ສາເຫດເຮັດໃຫ້ແມ່ຍິງ ແລະ ຜູ້ຊາຍມີບົດບາດຕ່າງກັນ.

### ເຮັດຫຍັງ :

- ແບ່ງກຸ່ມ ຍິງ ແລະ ຊາຍ ສົນທະນາກັນ
- ສະເໜີໃນກຸ່ມໃຫຍ່

**ເວລາ:** 2 ຊົ່ວໂມງ

### ອຸປະກອນ:

- ເຈັ້ຍແຜ່ນໃຫຍ່
- ບິກ
- ສະກອັດ
- ຄຳຖາມໃຫ້ແຕ່ລະກຸ່ມ
- ເອກະສານແຈກ 3

### ເຮັດແນວໃດ:

1. ແບ່ງກຸ່ມຍ່ອຍ ຍິງ ແລະ ຊາຍ ເພື່ອຄົ້ນຄ້ວາ ຕາມຄຳຖາມ ທີ່ໃຫ້
2. ຢາຍຄຳຖາມໃຫ້ແຕ່ລະກຸ່ມຄົ້ນຄວ້າ, ມີຄຳຖາມດັ່ງນີ້:
   (1) ແມ່ຍິງ ເຮັດວຽກຫຍັງແດ່ ໃນແຕ່ລະມື້ ຢູ່ໃນຄອບຄົວ ແບບດັ່ງເດີມ ?
   (2) ຜູ້ຊາຍ ເຮັດວຽກຫຍັງແດ່ ຢູ່ໃນຄອບຄົວ ແບບດັ່ງເດີມ ?
3. ກຸ່ມຍ່ອຍສະເໜີໃນກຸ່ມໃຫຍ່.
4. ຄູຝຶກບັນລະຍາຍ ໃຫ້ ຄຳນິຍາມ ວຽກ 3 ປະເພດ

5. ໃຫ້ກຸ່ມຍ່ອຍແຕ່ລະກຸ່ມໃສ່ສີໝາຍ ປະເພດວຽກທີ່ເຂົາເຈົ້າຄິດອອກມາ ( ສາມສີຕ່າງກັນ)
6. ກຸ່ມຍ່ອຍປ່ຽນກັນ ກວດວ່າ ກຸ່ມຍ່ອຍໃສ່ສີ ຂອງປະເພດວຽກ ຖືກຕ້ອງຫລືບໍ່, ໃຫ້ຄະແນນ ແຕ່ລະກຸ່ມຕາມຈຳນວນການໝາຍສີ ປະເພດວຽກ ແຕ່ລະປະເພດ;
7. ໃນກຸ່ມໃຫຍ່, ຄູຝຶກສະເໜີ ໃຫ້ ຜຂຮ ຄິດຫາ ວຽກໃດໜຶ່ງ ທີ່ສາມາດ ເປັນທັງ ສາມ ປະເພດວຽກ, ເປັນ ສອງປະເພດວຽກ, ເປັນ ໜຶ່ງ ປະເພດວຽກ;
8. ຄູຝຶກລະດົມສະໝອງ, ໃຊ້ຄຳຖາມ :

    (1) ແມ່ຍິງ ຫລື ຜູ້ຊາຍ ເຮັດວຽກຫລາຍກວ່າກັນ ? ເປັນຫຍັງ ?
9. ຄູຝຶກ ບັນລະຍາຍ "ວຽກໜັກແມ່ນຫຍັງ ?
10. ຄູຝຶກບັນລະຍາຍ "ວົງວຽນ ອຸບາດ ທີ່ເຮັດໃຫ້ແມ່ຍິງຕົກຢູ່ໃນຖານະເປັນຜູ້ຖືກນຳພາ"
11. ຄູຝຶກຖາມ ຜຂຮ ວ່າ ຈະຕັດຂັ້ນຕອນໃດ ເພື່ອຈະຊ່ວຍໃຫ້ແມ່ຍິງ ມີບົດບາດສູງຂຶ້ນ
12. ຄູຝຶກບັນລະຍາຍ ວຽກ 3 ບົດບາດ ຂອງ ແມ່ຍິງ, ວຽກ 2 ບົດບາດ ຂອງຜູ່ຊາຍ;

13. ແຈກເອກະສານ 3 ໃຫ້ຜູ້ເຂົ້າຮ່ວມອົບຮົມ

## ເອກະສານ 7:　　ວຽກ 3 ບົດບາດ ຂອງ ແມ່ຍິງ ແລະ ຜູ່ຊາຍ

1. <u>ວິເຄາະ 3 ປະເພດວຽກ ແລະ ສິດທິຂອງແມ່ຍິງ ແລະ ຜູ່ຊາຍໃນການແບ່ງວຽກ :</u>
   (1) ວຽກການຜະລິດ (ວຽກສ້າງຢູ່ທຳກິນ)
   (2) ວຽກເບິ່ງແຍງຄົນຄອບຄົວ (ວຽກເຮືອນວຽກຊານ, ວຽກບໍລິການຄົນໃນຄອບຄົວ, ວຽກເຮືອນ)
   (3) ວຽກຊຸມຊົນ (ວຽກສັງຄົມ, ວຽກນອກຄອບຄົວ)

- ວຽກຫລາຍ, ໜັກ ຫລື ເບົາ ແມ່ນວັດແທກຢູ່ທີ່ການສູນເສຍສຸກຂະພາບ ແລະ ເບິ່ງວ່າ ທົດແທນໄດ້ໄວ ຫລື ໄດ້ຫລາຍ ຫລື ບໍ່ໄດ້;
- ຍິງ ຊາຍ ມີສິດຄືກັນ ເພື່ອໄດ້ເຮັດວຽກຕາມຮ່າງກາຍສາມາດຮັບໄດ້;
- ຍິງ-ຊາຍ ມີສິດທິຄືກັນ ເພື່ອໄດ້ພັກຜ່ອນຕາມສົມຄວນ;

<u>2. ວິເຄາະ ການແບ່ງວຽກໃນຄອບຄົວ ມີອິດທິພົນເຮັດໃຫ້ ແມ່ຍິງ ບໍ່ມີ ບົດບາດເທົ່າກັບຜູ່ຊາຍ :</u>

1
**ແມ່ຍິງຂັງຢູ່ກັບວຽກໃນຄອບຄົວ ຫລາຍກວ່າຜູ່ຊາຍ**

2
**ຜູ່ຊາຍໄດ້ຂໍ້ມູນຂ່າວສານ ຫລາຍກວ່າເລື້ອຍໆ; ແມ່ຍິງບໍ່ມີເວລາໄດ້ຮັບຂໍ້ມູນ ຫລາຍຄືກັບຜູ່ຊາຍ, ມີການ ສຶກສາ ແລະ ມີຊີວິດທາງສັງ ຄົມໜ້ອຍກວ່າຜູ່ຊາຍ**

3
**ຜູ່ຊາຍມີຄວາມຮູ້ຫລາຍກວ່າແມ່ຍິງ, ກ້າຕັດສິນໃຈ; ແມ່ຍິງ ບໍ່ກ້າຕັດສິນໃຈ, ເກີດມີແນວຄິດຖືຕົນຕ່ຳ**

4
**ຜູ່ຊາຍນຳພາຫລາຍຂຶ້ນເລື້ອຍໆ; ແມ່ຍິງ ບໍ່ມີ ບົດບາດ ໃນຄອບຄົວ, ໃນສັງຄົມ**

<u>3. ບົດບາດ 3 ຢ່າງຂອງແມ່ຍິງໃນສັງຄົມ</u>

3.1. ບົດບາດໃນວຽກ ການຜະລິດ:

- ຖືກຖືວ່າເປັນວຽກສຳຮອງຕໍ່ຈາກວຽກຂອງຜົວ

3.2. ບົດບາດໃນ ການເບິ່ງແຍງຄອບຄົວ:

- ຖືກຖືວ່າ ບໍ່ແມ່ນວຽກທາງການ, ບໍ່ແມ່ນວຽກສ້າງເສດຖະກິດ

3.3. ບົດບາດໃນວຽກຊຸມຊົນ:

- ສ່ວນຫລາຍຢູ່ໃນຊຸມຊົນ ແມ່ຍິງ ມີບົດບາດ ແລະ ສ່ວນ ຮ່ວມໃນການຕັດ ສິນບັນຫາ ແລະ ຮັບປະກັນຕໍ່ການຕັດສິນບັນຫາ, ແຕ່ບົດບາດຂອງເຂົາເຈົ້າບໍ່ມີເປັນທາງການ.

4. ບົດບາດຂອງຜູ່ຊາຍ:

4.1. ບົດບາດທາງການຜະລິດ :

- ວຽກການຜະລິດ ຂອງຜູ່ຊາຍ ຖືກຖືວ່າ ເປັນວຽກທາງການ, ເປັນການສ້າງ ລາຍຮັບໃຫ້ຄອບຄົວ, ເປັນວຽກຢູ່ນອກຄອບຄົວ, ໃຫ້ຄຸນຄ່າຫລາຍກວ່າ ວຽກການຜະລິດ ຂອງແມ່ຍິງ.

4.2. ບົດບາດທາງການເມືອງ:

- ຜູ່ຊາຍ ຖືກຍອມຮັບວ່າມີບົດບາດທາງການເມືອງໄດ້ຫລາຍກວ່າ ແມ່ຍິງ.

ການແບ່ງວຽກໃນຄອບຄົວ ແບບໂບຮານ ເປັນສາເຫດໜຶ່ງ ທີ່ເຮັດໃຫ້ເກີດມີ ການກຳນົດ ບົດບາດ ຍິງ-ຊາຍ ໃຫ້ແຕກຕ່າງກັນ, ເຊິ່ງມີມາແຕ່ດຶກດຳບັນ ແລະ ຍັງມີຜົນສະທ້ອນມາຈົນຮອດປັດຈຸບັນ;

## ກິດຈະກຳ 9: ຮາກກົກຮາກເຄົ້າ ທີ່ເປັນສາເຫດ ຂອງ ເລື້ອງ ບົດບາດ ຍິງ-ຊາຍ

### ຈຸດປະສົງ:

- ເພື່ອໃຫ້ຜູ້ເຂົ້າຮ່ວມວິເຄາະໄດ້ວ່າ "ເປັນຫຍັງ ຈຶ່ງເກີດມີເລື້ອງ ບົດບາດຍິງ-ຊາຍ ທີ່ແຕກຕ່າງກັນ ໃນສັງຄົມມະນຸດ, ແມ່ນຫຍັງເປັນສາເຫດແທ້ໆ? "

### ເຮັດຫຍັງ:

- ແບ່ງກຸ່ມຍ່ອຍຄົ້ນຄວ້າ
- ສະເໜີໃນກຸ່ມໃຫຍ່
- ການອະທິບາຍຈາກຄູຝຶກ ໃນກຸ່ມໃຫຍ່
- ຈັດລຽງຄວາມສຳຄັນຂອງສາເຫດທີ່ວິເຄາະໄດ້

**ເວລາ:** 1 ຊົ່ວໂມງ

### ອຸປະກອນ:

- ເຈັ້ຍແຜ່ນໃຫຍ່
- ບິກເຟີດ
- ສະກອັດ
- ເອກະສານແຈກ 4

### ເຮັດແນວໃດ:

1. ແບ່ງກຸ່ມຍ່ອຍສົນທະນາກັນ, ແຕ່ລະກຸ່ມຄິດເຖິງ ໜຶ່ງປະເພດຂອງກຸ່ມຄົນ;
ຄຳຖາມ : ທ່ານຄິດແນວໃດ ກ່ຽວກັບ ເລື້ອງ ບົດບາດ ຍິງ-ຊາຍ ໃນປັດຈຸບັນ ໃນສັງຄົມ, ໃນບ່ອນເຮັດວຽກຂອງທ່ານ, ໃນ ຄອບຄົວຂອງທ່ານ, ໃນສະຖານທີ່ສາທາລະນະ, ໃນຮີດຄອງປະເພນີຊົນເຜົ່າຂອງທ່ານ ?

*<u>ໝາຍເຫດ</u> : ຄຳຖາມ ຄວນປ່ຽນ ຕາມປະເພດກຸ່ມຄົນ ທີ່ເປັນ ເປົ້າໝາຍ*

2. ສະເໜີໃນກຸ່ມໃຫຍ່;
3. ຄູຝຶກ ລະດົມສະໝອງໃນກຸ່ມໃຫຍ່ ດ້ວຍຄຳຖາມ : ມີຫຍັງເປັນສາເຫດທີ່ເຮັດໃຫ້ ແມ່ຍິງ ແລະ ຜູ້ຊາຍ ມີບົດບາດຕ່າງກັນ ດັ່ງທີ່ ແຕ່ລະກຸ່ມຍ່ອຍໄດ້ສະເໜີແລ້ວນັ້ນ ?
4. ຂຽນຄຳຕອບຂອງຜູ້ເຂົ້າຮ່ວມໃສ່ເຈັ້ຍໃຫຍ່
5. ຄູຝຶກສັງລວມ ຄຳຕອບ, ສະຫລຸບ ສາເຫດ ທີ່ມີທັງໝົດ, ສະເໜີໃຫ້ ຜູ້ເຂົ້າຮ່ວມອົບຮົມ ຈັດລຽງ ວ່າສາເຫດໃດມາກ່ອນ;
6. ເລົ່າເລື້ອງທີ່ພິສູດ ຮາກກົກຮາກເຄົ້າຂອງ ເລື້ອງ ບົດບາດ ຍິງ-ຊາຍ;
7. ຢາຍເອກະສານແຈກ 4 ໃຫ້ຜູ້ເຂົ້າຮ່ວມອົບຮົມ;

## ເອກະສານ 9: ຮາກກົກຮາກເຄົ້າ ທີ່ເປັນສາເຫດ ຂອງເລື້ອງ ບົດບາດ ຍິງ-ຊາຍ

ສາເຫດທີ່ເປັນຮາກເຫງົ້າ/ຮາກແກ້ວ (ປັດໃຈ) ທີ່ເຮັດໃຫ້ ແມ່ຍິງ ແລະ ຜູ້ຊາຍ ມີບົດບາດຕ່າງກັນ :

- ການແບ່ງງານ ລະຫວ່າງ ຍິງ-ຊາຍ ຕ່າງກັນ ຍ້ອນພາວະຮ່າງກາຍທີ່ທຳມະຊາດ ສ້າງມາຕ່າງກັນ ເປັນສາເຫດຕົ້ນຕໍ ແລະ ບວກໃສ່ປັດໃຈອື່ນ ອີກ :
- ເສດຖະກິດ (ຊັບພະຍາກອນ)
- ການປົກຄອງ, ການເມືອງ, ກົດໝາຍ, ກົດລະບຽບການຄຸ້ມຄອງຕ່າງໆຂອງສັງຄົມ
- ວັດທະນະທຳຂອງສັງຄົມ (ຄວາມເຊື່ອ, ຮີດຄອງປະເພນີ, ຄວາມຫວັງຂອງສັງຄົມ)

## ກິດຈະກຳ 10 : ສິດສະເໝີພາບ ແລະ ຄວາມທ່ຽງທຳ ລະຫວ່າງ ຍິງ-ຊາຍ

**ຈຸດປະສົງ:**

- ເພື່ອໃຫ້ຜູ້ເຂົ້າຮ່ວມ ວິເຄາະໄດ້ວ່າ ອັນໃດ ແມ່ນ ຄວາມສະເໝີພາບ ແລະ ອັນໃດ ແມ່ນ ຄວາມທ່ຽງທຳ ລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ.

**ເຮັດຫຍັງ:**

- ແບ່ງກຸ່ມ ຍິງ, ກຸ່ມ ຊາຍ ເພື່ອຄົ້ນຄວ້າຄຳຖາມລຸ່ມນີ້

**ເວລາ:** 1:30 ເຄິ່ງ

**ອຸປະກອນ:**

- ເຈ້ຍແຜ່ນໃຫ່ຍ
- ບິກເຟີດ
- ສະກອັດ
- ເອກະສານແຈກ 5

**ເຮັດແນວໃດ:**

1. ແບ່ງກຸ່ມ ຍິງ, ກຸ່ມ ຊາຍ ຄົ້ນຄວ້າ ຕາມຄຳຖາມທີ່ໃຫ້,
   ຄຳຖາມ :
   (1) ທ່ານມີຄວາມເຂົ້າໃຈແນວໃດ ຕໍ່ຄຳວ່າ "ສິດສະເໝີພາບ" ແລະ ຕໍ່ຄຳວ່າ "ຄວາມທ່ຽງທຳ" ລະຫວ່າງ ຍິງ-ຊາຍ ?
2. ແຕ່ລະກຸ່ມສະເໜີໃນກຸ່ມໃຫຍ່
3. ຄູຝຶກສັງລວມ ຄຳຕອບຂອງກຸ່ມທັງໝົດ
4. ຄູຝຶກບັນລະຍາຍ "ແຕກຕ່າງກັນ ລະຫວ່າງ ສິດສະເໝີພາບ ແລະ ຄວາມທ່ຽງທຳ ລະຫວ່າງ ຍິງ-ຊາຍ"
5. ຢາຍເອກະສານແຈກ 5 ໃຫ້ຜູ້ເຂົ້າຮ່ວມອົບຮົມ

## ເອກະສານ 10 : ສິດສະເໝີພາບ ແລະ ຄວາມທ່ຽງທຳ ລະຫວ່າງ ຍິງ-ຊາຍ

- ຢາກເບິ່ງ ຍິງ-ຊາຍ ມີ ສິດສະເໝີພາບ ກັນ ແມ່ນກວດເບິ່ງ 3 ປັດໃຈ ເຊັ່ນວ່າ :
  - ແມ່ນໃຜເປັນຜູ້ຕັດສິນໃຈ?
  - ແມ່ນໃຜເປັນຜູ້ຄວບຄຸມ ແລະ ແບ່ງປັນແຈກຢາຍຊັບພະຍາກອນ ?
  - ແລະ ໃຜມີອຳນາດ?

- ສິດສະເໝີພາບ ລະຫວ່າງ ຍິງ-ຊາຍ ແມ່ນ ການຮັບຮູ້ ແລະ ປະກາດ ສິດທິເທົ່າທຽມກັນ ລະຫວ່າງ ຍິງ ແລະ ຊາຍ ໃນທາງກົດໝາຍ, ໃນນະໂຍບາຍ, ແລະ ໃນຂໍ້ກຳນົດ ກົດລະບຽບຕ່າງໆ ແລະ ການປະຕິບັດຕົວຈິງໃນ ການຮັບຮູ້ສິດທິເທົ່າທຽມກັນ ລະຫວ່າງ ຍິງ-ຊາຍ ຕາມຮູບແບບທາງການທີ່ກ່າວນັ້ນ.

- ຄວາມທ່ຽງທຳ ລະຫວ່າງ ຍິງ-ຊາຍ ແມ່ນ ການໄດ້ຮັບໃນຕົວຈິງ ທີ່ ແມ່ຍິງ ແລະ ຜູ້ຊາຍ ໄດ້ຮັບ ຢ່າງເປັນທຳຄືກັນ, ເຊັ່ນວ່າ: ຍິງ ແລະ ຊາຍ ໄດ້ຮັບຜົນປະໂຫຍດຈາກ ການແບ່ງປັນແຈກຢາຍຊັບພະຍາກອນຢ່າງເປັນທຳຄືກັນ.

- ເພື່ອຮັບປະກັນໃຫ້ມີຄວາມທ່ຽງທຳແກ່ແມ່ຍິງ ແລະ ຜູ້ຊາຍ ໃນຕົວຈິງ ຂອງການໄດ້ຮັບຜົນປະໂຫຍດນັ້ນ ຈຳເປັນຕ້ອງມີ ການກຳນົດຍຸດທະສາດສະເພາະ, ແຜນງານສະເພາະບາງຢ່າງ, ຕະຫລອດຮອດມີໂຄງການສະເພາະບາງຢ່າງ ເພື່ອປະຕິບັດ ອູ້ມຊູ ໃຫ້ເກີດມີຄວາມເປັນທຳ (ຄວາມທ່ຽງທຳ) ລະຫວ່າງ ຍິງ-ຊາຍ ທີ່ເປັນຜົນອອກ ຈາກ ການປະຕິ ບັດຕົວຈິງ ໃນກົດໝາຍ, ນະໂຍບາຍ, ຂໍ້ກຳນົດກົດລະບຽບຕ່າງໆ ທີ່ປະກາດຮັບຮູ້ ສິດ ສະເໝີພາບ ລະຫວ່າງ ຍິງ-ຊາຍ ນັ້ນ.

## ກິດຈະກຳ 11 : ວິເຄາະກຳລະນີສຶກສາ

**ຈຸດປະສົງ:**

- ເພື່ອສ້າງທັກສະ ໃຫ້ຜູ້ເຂົ້າຮ່ວມ ສາມາດ ວິເຄາະ ເຫດການຕົວຈິງໃນຊີວິດ, ດ້ວຍການໃຊ້ສາຍຕາ ປັດຊະຍາ ບົດ ບາດ ຍິງ-ຊາຍ ເປັນຈຸດຢືນ;

**ເຮັດຫຍັງ :**

- ແຕ່ລະກຸ່ມຍ່ອຍ ຄົ້ນຄວ້າ ກຳລະນີສຶກສາ

**ເວລາ:** 1.30 ຊົ່ວໂມງ

**ອຸປະກອນ :**

- ເຈ້ຍແຜ່ນໃຫຍ່
- ບິກເຟີດ
- ສະກາອັດ
- ເອກະສານກຳລະນີສຶກສາ

**ເຮັດແນວໃດ:**

1. ແບ່ງກຸ່ມ ຕາມຂະແໜງການ
2. ແຈກຢາຍກຳລະນີສຶກສາໃຫ້ກຸ່ມທີ່ສັບຂະແໜງການ, ໝາຍຄວາມວ່າ ແຕ່ລະກຸ່ມຄົ້ນຄວ້າເລື້ອງໃນກຳລະນີ ສຶກສາ ທີ່ບໍ່ແມ່ນວຽກຂອງຂະແໜງການຂອງຕົນ;
3. ສະເໜີຜົນການຄົ້ນຄວ້າໃນກຸ່ມໃຫຍ່ ແລະ ສົນທະນາກັນ
4. ຄູຝຶກສະຫລຸບ

## ເອກະສານ 11: ກໍລະນີສຶກສາ ແລະ ຄໍາຖາມຄົ້ນຄວ້າ

- ຫົວຂໍ້ເລື່ອງ ທີ່ມີຢູ່ໃນສະພາບຕົວຈິງຂອງ ຊີວິດໃນສັງຄົມ ທີ່ ກ່ຽວກັບ :

  1. ວຽກງານສາທາ ໃນເຂດຊົນເຜົ່າ
  2. ວຽກງານກະສິກໍາ
  3. ວຽກງານ ສຶກສາ
  4. ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ
  5. ເລື່ອງທົ່ວໄປບາງຢ່າງ ໃນສັງຄົມ

- ກໍລະນີ ສຶກສາທັງໝົດ ຈັດໄວ້ໃນພາກສະເພາະ ຂອງປື້ມຄູ່ມືນີ້.

- ຄໍາຖາມທີ່ຕຽມໃຫ້ຜູ້ເຂົ້າຮ່ວມໃຊ້ ຄົ້ນຄວ້າແຕ່ລະກໍລະນີສຶກສາ ຄວນເປັນຄໍາຖາມທີ່ສ້າງທັກສະ ໃຫ້ຜູ້ເຂົ້າຮ່ວມອົບຮົມ ໃນການວິເຄາະ ເຫດການໃນຊີວິດຕົວຈິງ ດ້ວຍສາຍຕາຄວາມເປັນທໍາ ລະຫວ່າງ ຍິງ-ຊາຍ.

- ຊຸດຄໍາຖາມທີ່ກະຕຽມໃຫ້ເພື່ອໃຊ້ວິເຄາະກໍລະນີສຶກສາທີ່ມີໃນປື້ມຄູ່ມືນີ້ ມີດັ່ງລຸ່ມນີ້ :

  (1) ເປັນຫຍັງ ໃນສັງຄົມລາວ ຈຶ່ງມີເຫດການແບບນີ້ ?
  (2) ມັນລະເມີດ ສິດທິ ແມ່ຍິງ ແນວໃດແດ່ ?
  (3) ສັງຄົມ ຮັບຮູ້ ສິດສະເໝີພາບ ຍິງ-ຊາຍ ທີ່ກ່ຽວຂ້ອງ ກັບ ເຫດການແບບນີ້ ແນວໃດ ?
  (4) ເຫດການ ມີຄວາມເປັນທໍາ ສໍາລັບ ແມ່ຍິງ ບໍ່ ?
  (5) ຈະຕ້ອງປັບປຸງປ່ຽນແປງ ຫຍັງແດ່ ? (ບອກ ຢ່າງໜ້ອຍ 5 ຢ່າງ)
  (6) ມີທ່າແຮງ ແລະ ຂໍ້ຫຍຸ້ງຍາກ ຫລື ຂໍ້ຈໍາກັດແນວໃດ ຖ້າຈະປັບປຸງ ດ້ວຍ 5 ຢ່າງນີ້ ?
  (7) ຈະປັບປຸງ ໄດ້ຫລາຍປານໃດ ຖ້າ ມີ 5 ຢ່າງນີ້ ?
  (8) ແມ່ຍິງ ຈະຫລຸດພົ້ນຈາກ ຄວາມບໍ່ເປັນທໍາ ໄດ້ຫລາຍປານໃດ ?

## ກິດຈະກຳ 12 : ການປະເມີນຜົນຕົນເອງ ຂອງ ຜູ້ເຂົ້າຮ່ວມ

### ຈຸດປະສົງ :

- ໃຫ້ຜູ້ເຂົ້າຮ່ວມອົບຮົມ ຄິດຄືນ ວ່າ ເຂົາເຈົ້າໄດ້ ຮຽນຮູ້ຫຍັງຫລາຍທີ່ສຸດ ຈາກການ ອົບຮົມຄັ້ງນີ້
- ເພື່ອຮູ້ຄວາມຫວັງຕໍ່ໄປຂອງແຕ່ລະຄົນ

### ເຮັດຫຍັງ :

- ໃຫ້ຜູ້ເຂົ້າຮ່ວມຕອບຕາມຄຳຖາມປະເມີນຜົນ
- ຈັບຄູ່ກັນ ປະເມີນຜົນ
- ສົ່ງຄຳຕອບໃຫ້ຄູຝຶກ

**ເວລາ :** 1 ຊົ່ວໂມງ

### ອຸປະກອນ :

- ເຈັ້ຍ A4
- ບິກ
- ເອກກະສານຄຳຖາມປະເມີນຜົນ

### ເຮັດແນວໃດ :

(1) ຢາຍເອກະສານຄຳຖາມໃຫ້ແຕ່ລະຄົນອ່ານ

(2) ໃຫ້ແຕ່ລະຄົນໃຊ້ເວລາສະມາທິຄິດຄືນການຮຽນຮູ້ 3 ມື້ ແລ້ວຈຶ່ງຕອບຄຳຖາມ ປະເມີນຜົນ

(3) ບໍ່ຕ້ອງລົງຊື່ຜູ້ຕອບໃສ່ໃບປະເມີນຜົນ

(4) ຫລັງຈາກທຸກຄົນຕອບແລ້ວບອກໃຫ້ເຂົາເຈົ້າຈັບຄູ່ກັນຕາມໃຈ, ຖ້າຈື່ຄູ່ມື້ທຳອິດໄດ້ ກໍຍິ່ງດີ,

(5) ແຕ່ລະຄູ່ ບອກຄຳຕອບຂອງຕົນເອງໃຫ້ຄູ່ຟັງລະອຽດ

(6) ແຕ່ລະຄົນສົ່ງຄຳຕອບຂອງຕົນເອງໃຫ້ຄູຝຶກ

## ເອກະສານ 12 : ຄຳຖາມປະເມີນຜົນ

ການຕັ້ງຄຳຖາມປະເມີນ ຄວນເປັນຄຳຖາມ ທີ່ຊ່ວຍໃຫ້ຜູ້ເຂົ້າຮັບອົບຮົມ ໄດ້ຄຶດຄືນ ກ່ຽວກັບ ການຮຽນຮູ້ຂອງເຂົາເຈົ້າແຕ່ລະຄົນ ຈາກ ການອົບຮົມ ແຕ່ລະຄັ້ງ.

ຄຳຖາມປະເມີນຜົນຢູ່ຕໍ່ໄປນີ້, ໃຊ້ກັບຜູ້ຮັບການອົບຮົມ ທີ່ຈະເປັນ ຄູຝຶກ ບົດບາດ ຍິງ-ຊາຍ ຕໍ່ໄປ :

(1) ທ່ານຄິດວ່າ ຜ່ານການອົບຮົມ 3 ມື້ແລ້ວ ທ່ານເອງເຂົ້າໃຈ ແລະ ສາມາດຈະວິເຄາະ ຫົວຂໍ້ໃດ ໄດ້ດີທີ່ສຸດ ໃຫ້ຫ້ອງຮຽນຕໍ່ໄປ ທີ່ທ່ານຈະຕ້ອງເປັນຄູຝຶກ (ບອກ 1 ຫົວຂໍ້) ?

(2) ເປັນຫຍັງ ?

(3) ຫົວຂໍ້ໃດ ທີ່ທ່ານຄິດວ່າ ບໍ່ຄວນ ຈັດເຂົ້າໃສ່ໃນຫລັກສູດການອົບຮົມບົດບາດ ຍິງ ຊາຍ ?

(4) ເປັນຫຍັງ ?

(5) ທ່ານຢາກສະເໜີ ໃຫ້ມີຫົວຂໍ້ໃດເພີ່ມເຕີມໃສ່ການອົບຮົມແບບນີ້ ? ອະທິບາຍ.

(5) ທ່ານມັກເຕັກນິກໃດທີ່ສຸດ ທີ່ໃຊ້ໃນການອົບຮົມຄັ້ງນີ້ ?

(6) ເປັນຫຍັງ ?

(7) ທ່ານຄິດວ່າ ເຕັກນິກໃດ ທີ່ບໍ່ຄວນໃຊ້ ຈາກ ການອົບຮົມຄັ້ງນີ້ ?

(8) ເປັນຫຍັງ ?

(9) ທ່ານຮູ້ເຕັກນິກອື່ນໃດ ທີ່ຢາກສະເໜີ ໃຫ້ນຳໃຊ້ ໃນການຝຶກອົບຮົມແບບນີ້ ບໍ່ ?

(10 ) ອະທິບາຍ ເຕັກນິກ ຂອງທ່ານ.

(11) ຈາກນີ້ຕໍ່ໄປ ທ່ານຈະເຮັດຫຍັງ ເພື່ອສົ່ງເສີມ ຄວາມເປັນທຳ ລະຫວ່າງ ຍິງ-ຊາຍ ?

# ກໍລະນີສຶກສາ

## ກໍລະນີສຶກສາ 1 :

## ເລື້ອງ ທີ 1 : ເຮືອນຂອງ ທ່ານ ດາກວິນ

ທ່ານ ດາກວິນ ໄດ້ອອກຈາກ ປະເທດ ອັງກິດ ແລະ ຫາກໍຍ້າຍມາຢູ່ປະເທດລາວ ແລະ ຢາກຈະຊື້ເຮືອນ ເປັນຂອງຕົນເອງ. ມື້ໜຶ່ງລາວໄດ້ພົບຊາຍຄົນໜຶ່ງທີ່ຮ້ານອາຫານ ແລະ ຊາຍຄົນນັ້ນໄດ້ໃຫ້ສັນຍາວ່າຈະຂາຍເຮືອນໃຫ້ ທ່ານ ດາກວິນ. ທ່ານ ດາກວິນ ກໍມີຄວາມດີໃຈ, ແຕ່ປາກົດວ່າເຮືອນຫລັງດັ່ງກ່າວຍັງມີຄອບຄົວອື່ນເຊົ່າຢູ່ ສະນັ້ນ ທ່ານ ດາກວິນ ຈຶ່ງໄດ້ເຫັນ ແຕ່ພຽງທາງນອກຂອງເຮືອນ ແທນທີ່ຈະໄດ້ກວດກາເບິ່ງດ້ານໃນຂອງເຮືອນນັ້ນ. ທ່ານ ດາກວິນ ເຫັນພຽງແຕ່ຮູບພາບຈຳນວນໜຶ່ງ. ພາຍຫລັງສົນທະນາກັນໃນໄລຍະສັ້ນໆ ທ່ານ ດາກວິນ ກໍເຮັດສັນຍາ ແລະ ມອບເງິນມອບເງິນຄ່າຊື້ເຮືອນໃຫ້ແກ່ຊາຍຄົນນັ້ນ ຕາມການຕົກລົງກັນ. ສຸດທ້າຍ 4 ອາທິດຕໍ່ມາ ທ່ານ ດາກວິນ ຈະຍ້າຍເຂົ້າໄປຢູ່ເຮືອນຫລັງນັ້ນ, ຜູ້ກ່ຽວຈຶ່ງໄດ້ຮູ້ວ່າເຮືອນຫລັງນັ້ນບໍ່ແມ່ນເຮືອນເຊົ່າ, ແຕ່ມັນແມ່ນເຮືອນຂອງຄອບຄົວທີ່ກຳລັງອາໃສຢູ່ນັ້ນ. ຊາຍຄົນທີ່ພົບກັນຢູ່ຮ້ານອາຫານໄດ້ຂາຍເຮືອນແບບງ່າຍໆ ຊຶ່ງເຮືອນນັ້ນກໍບໍ່ແມ່ນຂອງລາວ.

<u>ຄຳຖາມ :</u>

- ທ່ານຄິດແນວໃດ ກັບ ເລື້ອງທີ່ເລົ່ານີ້, ກະລຸນນາໃຊ້ສາຍຕາບົດບາດ ຍິງ-ຊາຍ ຄິດຫາຄຳຕອບ ຢ່າງໜ້ອຍ 3 ຄຳຕອບ,
- ແລ້ວສົນທະນາກັນ ຫາວິທີປັບປຸງ ເລື້ອງ ບົດບາດ ຍິງ-ຊາຍ ຈາກເຫດການແບບນີ້.

## ເລື້ອງທີ 2 : ກົດໝາຍອາຍາປະເທດໜຶ່ງ ລະບຸວ່າ :

" ອາຊະຍາກອນ ຕ້ອງການຄວາມຊ່ວຍເຫຼືອຫຼາຍກວ່າການລົງໂທດ "

"Criminals need help more than punishment "

(ອະຊະຍາກອນ : ໝາຍເຖິງບຸກຄົນຜູ້ຖືກຕັດສິນລົງໂທດ)

**ການຄົ້ນຄວ້າ :**

1. ສົນທະນາກັນກ່ຽວກັບຖ້ອຍຄຳຢູ່ຂ້າງເທິງນີ້, ດ້ວຍສາຍຕາບົດບາດຍິງ-ຊາຍ. ຢ່າງໜ້ອຍໃຫ້ໄດ້ 5 ຄຳເຫັນທີ່ເຫັນດີ, ແລະ 5 ຄຳເຫັນທີ່ບໍ່ເຫັນດີ ນຳຖ້ອຍຄຳຢູ່ຂ້າງເທິງ,

2. ສົນທະນາວິທີການທີ່ຈະປະຕິບັດຕົວຈິງ ຕາມຄຳເຫັນ ທີ່ທ່ານເຫັນດີນຳຖ້ອຍຄຳນີ້ ໂດຍອີງໃສ່ 5 ຄຳເຫັນທີ່ທ່ານຄິດອອກມາ.

## <u>ເລື້ອງທີ 3 : ການດື່ມເຫຼົ້າ ແລະ ການຂັບຂີ່ ( Drink and Drive)</u>

ຫລັງຈາກໄປຮ່ວມງານແຕ່ງດອງແລ້ວ ເມື່ອເວລາກັບບ້ານ ຄູ່ຜົວເມຍ ທ່ານ ຄຳ ເປັນຜູ້ຂັບລົດ ແລ້ວເກີດອຸປະຕິເຫດ. ທ່ານ ຄຳ ໄດ້ດື່ມເບຍຫລາຍຈອກ ແລະ ເວລາຂັບລົດນັ້ນລາວໄດ້ພະຍາຍາມຫຼີກບໍ່ໃຫ້ຕຳຕົ້ນໄມ້ຢູ່ແຄມທາງ, ແຕ່ໂດຍບັງເອີນລາວພັດໄປຕຳເອົາຜູ້ຊາຍຄົນໜຶ່ງ ແລະ ລູກຊາຍ ທີ່ກຳລັງຂີ່ລົດຈັກຢູ່.

ນາງ ໃສ ຜູ້ເປັນເມຍຂອງ ທ້າວ ຄຳ ມີຄວາມເສັຽໃຈຫລາຍ ແລະ ລາວຮູ້ສຶກວ່າອຸປະ ຕິເຫດທີ່ເກີດຂຶ້ນນັ້ນ ແມ່ນຄວາມຜິດຂອງລາວ. ລາວເວົ້າວ່າ " ຖ້າຂ້ອຍໄດ້ບອກໃຫ້ ຜົວຂ້ອຍຂັບລົດດ້ວຍຄວາມລະມັດລະວັງແດ່ ແລ້ວອຸປະຕິເຫດກໍຄົງບໍ່ເກີດຂຶ້ນ ".

<u>ຄຳຖາມ :</u>

ໃຊ້ສາຍຕາ ບົດບາດ ຍິງ-ຊາຍ ສົນທະນາກັນ :

1. ນາງ ໃສ ມີຄວາມຜິດໃນອຸປະຕິເຫດນີ້ ບໍ່ ?

3. ຖ້າ ແມ່ນ ນາງ ໃສ ເປັນຜູ້ຂັບລົດຕຳສອງພໍ່ລູກຕາຍ, ແລ້ວ ທ. ຄຳ ຈະມີຄວາມຮູ້ສຶກແບບດຽວກັບນາງ ໃສ ຮູ້ສຶກບໍ່ ຫລື ຈະມີປະຕິກິລິຍາແນວໃດ ? ບອກຢ່າງໜ້ອຍ 3 ຢ່າງ.
4. ທ່ານຄິດວ່າຄວນປ່ຽນແປງ (ປັບປຸງ) ຫຍັງແດ່ ເພື່ອບໍ່ໃຫ້ເກີດມີເຫດການນີ້ ? ບອກຢ່າງໜ້ອຍ 3 ຢ່າງ.

**ກໍລະນີສຶກສາ 2 : ການໃຊ້ຄວາມຮຸນແຮງ ຕໍ່ແມ່ຍິງ**

ພະນັກງານ 1 ຄົນ ທີ່ເຮັດວຽກພັດທະນາຊຸມຊົນຢູ່ຊົນນະບົດ ໄດ້ເດີນທາງໄປເຮັດວຽກຢູ່ບ້ານຊົນເຜົ່າແຫ່ງໜຶ່ງ. ມີພະນັກງານຈາກສະຫະພັນແມ່ຍິງຮ່ວມເດີນທາງໄປນຳ. ພະນັກງານທັງສອງໄດ້ນອນຄ້າງຄືນຢູ່ບ້ານນັ້ນ 1 ຄືນ. ຕອນກາງເດິກມາ ເກີດມີສຽງແມ່ຍິງຮ້ອງໄຫ້ ແລະ ມີສຽງທຸບຕີ ແລະ ປ້ອຍດ່າ. ພະນັກງານທັງສອງລົມກັນວ່າ ຄືຊິແມ່ນຜົວຕີເມັຍ. ເຈົ້າຂອງເຮືອນບ່ອນພະນັກງານພັກຢູ່ນຳກໍ່ບອກວ່າ ແມ່ນຜົວຕີເມັຍ, ຕີເລື້ອຍໆ.

ພະນັກງານພັດທະນາ ຈຶ່ງບອກພະນັກງານຈາກສະຫະພັນແມ່ຍິງວ່າ ໄປບອກໃຫ້ຜູ່ຊາຍຜູ້ນັ້ນເຊົາຕີເມັຍສະ ແຕ່ພະນັກງານສະຫະພັນແມ່ຍິງ ແລະ ເຈົ້າຂອງເຮືອນ (ທັງຜົວ ແລະ ເມັຍ) ບອກວ່າ "**ບໍ່ໄດ້, ເພາະຜູ່ຊາຍຜູ້ນັ້ນ ຈະບອກວ່າແມ່ນ ເລື້ອງພາຍໃນຄອບຄົວເຂົາເຈົ້າ, ຍິ່ງໄປກວ່ານັ້ນ ຜູ່ຊາຍຜູ້ນັ້ນ ຈະຫາວ່າເມັຍມີຊູ້ຊາ້ ເພາະມີຄົນມາຊ່ວຍ**" ເຈົ້າຂອງເຮືອນຍັງ ເລົ່າຕໍ່ໄປວ່າ ມັນເປັນເລື່ອງທຳມະດາຊາ້ ສຳລັບເຜົ່າຂອງເຂົາເຈົ້າ ເພາະຜູ່ຊາຍຊື້ເມັຍມາແພງແລ້ວ (ໝູ 3 ໂຕ, ງົວ 1 ໂຕ, ຫຼັງຈາກແຕ່ງງານແລ້ວ ເມັຍບໍ່ມີສິດຫຍັງໃນຄອບຄົວ/ເປັນຄືວັດຖຸທີ່ຜົວເປັນເຈົ້າຂອງ.

<u>**ຄຳຖາມ**</u>: ໃຊ້ສາຍຕາ ບົດບາດ ຍິງ-ຊາຍ ຄົ້ນຄວ້າ ຄຳຖາມຕໍ່ໄປນີ້

1. ເປັນຫຍັງ ໃນສັງຄົມລາວ ຈຶ່ງຍັງມີເຫດການແບບນີ້ ?
2. ມັນລະເມີດ ສິດທິມະນຸດ ຂອງ ແມ່ຍິງ ແນວໃດແດ່ ?
3. ສັງຄົມ ຮັບຮູ້ ສິດສະເໝີພາບ ຍິງ-ຊາຍ ທີ່ກ່ຽວຂ້ອງ ກັບ ເຫດການແບບນີ້ ແນວໃດ ?
4. ເຫດການ ນີ້ມີຄວາມເປັນທຳ ສຳລັບ ແມ່ຍິງ ບໍ່ ?
5. ຈະຕ້ອງປັບປຸງປ່ຽນແປງ ຫຍັງແດ່ ? (ບອກ ຢ່າງໜ້ອຍ 5 ຢ່າງ)
6. ມີທ່າແຮງ ແລະ ຂໍ້ຫຍຸ້ງຍາກ ຫລື ຂໍ້ຈຳກັດແນວໃດ ຖ້າຈະປັບປຸງ ດ້ວຍ 5 ຢ່າງນີ້ ?
7. ຈະປັບປຸງ ໄດ້ຫລາຍປານໃດ ຖ້າ ມີ 5 ຢ່າງນີ້ ?
8. ແມ່ຍິງ ຈະຫລຸດພົ້ນຈາກ ຄວາມບໍ່ເປັນທຳ ໄດ້ຫລາຍປານໃດ ?

**ກໍລະນີສຶກສາ 3 : ການເງິນ ຈຸລະພາກ**

ໂຄງການພັດທະນາຊຸມຊົນໜຶ່ງ ສົ່ງເສີມກິດຈະກໍາການເງິນຈຸລະພາກໃຫ້ແກ່ຊາວຊົນນະບົດຫ່າງໄກສອກຫຼີກ.

ກົດລະບຽບຂອງກອງທຶນທີ່ໂຄງການມອບໃຫ້ຊາວບ້ານຄຸ້ມຄອງບໍລິຫານກໍານົດວ່າ:

1. ທຸກຄອບຄົວມີສິດເທົ່າທຽມກັນທີ່ຈະເປັນສະມາຊິກຝາກ ແລະ ຢືມເງິນຂອງກອງທຶນ.
2. ຊາວບ້ານ ຕ້ອງແຕ່ງຕັ້ງຄະນະບໍລິຫານກອງທຶນ ໂດຍຮັບປະກັນໃຫ້ມີແມ່ຍິງ ແລະ ຜູ້ຊາຍຮ່ວມກັນ, ພ້ອມທັງແນະນໍາວ່າ ແຕ່ລະບ້ານໃຫ້ມີ 8 ຄົນໃນຄະນະບໍລິຫານກອງທຶນ, ໃນນັ້ນມີຜູ້ຊາຍ 6 ຄົນ, ແມ່ຍິງ 2 ຄົນ. ໜ້າທີ່ຂອງຄະນະກໍາມະການທີ່ເປັນແມ່ຍິງ ແມ່ນມອບໃຫ້ກໍາເງິນສົດ (1 ຄົນ); ອີກ 1 ຄົນ ແມ່ນຜູ້ສັ່ງໃຫ້ຜູ້ກໍາເງິນສົດເບີກຈ່າຍ ຫຼື ຮັບເງິນ ຕາມທີ່ຫົວໜ້າຄະນະຈະເປັນຜູ້ບອກກ່ອນ.

<u>**ການຕິດຕາມປະເມີນຜົນ :**</u>

1. ເວລາໄປຕິດຕາມ ໄດ້ເຫັນວ່າໃນປຶ້ມສະມາຊິກກອງທຶນມີແຕ່ຊື່ຫົວໜ້າຄອບຄົວເປັນເຈົ້າຂອງປຶ້ມເງິນ ຝາກ ແລະ ຖອນ. ຄະນະກໍາມະການອະທິບາຍວ່າ :

   - ພວກເຮົາໃສ່ຊື່ຫົວໜ້າຄອບຄົວ ເພາະລາວຕາງໜ້າຄອບຄົວ ແລະ ລາວຈະຮັບຜິດຊອບ ຖ້າຄອບຄົວ ບໍ່ສາມາດປະຕິບັດລະບຽບ ຂອງກອງທຶນໄດ້.

   - ຖ້າເມຍຢາກເອົາປຶ້ມສະມາຊິກມາຝາກ ຫຼື ຖອນເງິນກໍ່ໄດ້ ເພາະຄະນະກໍາມະການກໍແມ່ນຄົນ ຢູ່ໃນບ້ານ, ເຂົາເຈົ້າຮູ້ວ່າ ແມ່ນໃຜເປັນເມັຽຂອງຜູ້ໃດ.

2. ເວລາໄປຕິດຕາມ ມີແມ່ຍິງຈໍານວນໜຶ່ງບອກວ່າ ຍາມຜົວບໍ່ຢູ່ ບໍ່ສາມາດໄປເບີກເງິນໄດ້ ເພາະຜົວເຊື່ອງປຶ້ມໄວ້ໃສກໍ່ບໍ່ຮູ້.

3. ແມ່ຍິງອີກພວກໜຶ່ງບອກວ່າ ເຂົາເຈົ້າຫ້ອນເງິນຂາຍສາລີໄດ້ ໜ້ອຍໜຶ່ງ ຢາກເອົາໄປຝາກໃສ່ ຊື່ໂຕ ເອງໄວ້, ແຕ່ຜົວບອກວ່າ ຝາກນໍາກັນໃສ່ປຶ້ມຫົວດຽວກໍ່ໄດ້.

4. ພວກກຸ່ມແມ່ຍິງບອກວ່າ ເພື່ອນຮ່ວມບ້ານຂອງເຂົາເຈົ້າ ທີ່ແມ່ນ ພວກ ແມ່ຍິງຜູ້ທຸກແທ້ໆ ແທ່ງບໍ່ກ້າເປັນສະມາຊິກກອງທຶນຊຳ້ ເພາະບໍ່ມີເງິນຈະເສຍຄ່າ ເປັນສະມາຊິກ, ບໍ່ມີເງິນ ຈະ ຝາກ, ມີແຕ່ຢາກຢືມ ແລະ ຄະນະກໍ່ບໍ່ກ້າໃຫ້ຢືມ ເພາະ ຢ້ານເສຍທຶນລ້າໆ ເພາະເຂົາ ເຈົ້າຈະໃຊ້ຄືນບໍ່ໄດ້.

5. ຍິ່ງໄປກວ່ານັ້ນ ພວກແມ່ຍິງທຸກ ບາງຄົນກໍ່ຢູ່ຜູ້ດຽວ ບໍ່ມີຜົວ, ບໍ່ມີປື້ມສຳມະໂນຄົວ, ບໍ່ມີ ໂອກາດຈະໄດ້ຜົນປະໂຫຍດຈາກກອງທຶນ.

**<u>ຄຳຖາມ</u>:** ກະລຸນນາ ໃຊ້ ສາຍຕາ ບົດບາດ ຍິງ-ຊາຍ ຄົ້ນຄວ້າຄຳຖາມຕໍ່ໄປນີ້

1. ໂຄງການນີ້ ຄຳນຶງ ເຖິງ ສິດສະເໝີພາບ ຍິງ-ຊາຍ ບໍ່ ? ອະທິບາຍ ຄຳຕອບ.
2. ໂຄງການນີ້ໄດ້ເຮັດໃຫ້ເກີດມີ ຄວາມເປັນທຳ ສຳລັບແມ່ຍິງ ບໍ່? ອະທິບາຍ ຄຳຕອບ.
3. ເປັນຫຍັງ ມັນຈິ່ງ ມີຄວາມບໍ່ເປັນທຳເກີດຂຶ້ນ ໃນໂຄງການນີ້ ? ບອກຢ່າງໜ້ອຍ 5 ສາເຫດ.
4. ແຕ່ລະສາເຫດ ຈະສາມາດແກ້ໄຂແນວໃດ ແດ່ ? ບອກ ກ່ຽວກັບ ແຕ່ລະສາເຫດ.
5. ມີທ່າແຮງ ທີ່ຈະແກ້ໄຂ ແນວໃດ ຕໍ່ແຕ່ລະສາເຫດ? ແລະ ມີ ຂໍ້ຈຳກັດແນວໃດ ຕໍ່ແຕ່ ລະສາເຫດ?
6. ຖ້າປັບປຸງ (ແກ້ໄຂ) ແຕ່ລະສາເຫດ ແລ້ວ ແມ່ຍິງ ຈະ ໄດ້ຮັບຄວາມເປັນທຳ ຫລາຍ ປານໃດ?

## ກໍລະນີສຶກສາ 4 : ການສຶກສາ

ທີມປະເມີນຜົນໂຄງການໜຶ່ງ ໄດ້ໄປໂອ້ລົມກັບຊາວບ້ານພວກແມ່ຍິງຢູ່ບ້ານ ໂຄງການ ທີ່ຢູ່ຫ່າງໄກສອກຫລີກ ທີ່ເປັນບ້ານຂອງຄົນຊົນເຜົ່າພວກໜຶ່ງ, ຊາວບ້ານສ່ວນໃຫຍ່ເວົ້າພາສາ ລາວບໍ່ໄດ້ຊັດເຈນດີ, ແລະ ມີການພົວພັນກັບຄົນພາຍນອກຈຳນວນໜ້ອຍດຽວ ເຊິ່ງແມ່ນພວກພໍ່ຄ້າແມ່ຄ້າ ໄປຊອກຊື້ເຂົ້າໃນຍາມເຂົ້າອຶດ, ແລະ ໃນຍາມຕ້ອງການເປັດໄກ່ຫລາຍເພື່ອຊື້ແລ້ວມາຂາຍ ຕໍ່ຢູ່ຕະຫລາດໃນຕົວເມືອງ.

ພວກແມ່ຍິງໃນບ້ານນີ້ທີ່ໄດ້ໂອ້ລົມນຳທີມປະເມີນຜົນ ເວົ້າວ່າ ພວກເຂົາເຈົ້າດີໃຈຫລາຍ ທີ່ໂຄງການປຸກໂຮງຮຽນປະຖົມ 1 ຫລັງ (ປ1 ຫາ ປ5) ໃຫ້ບ້ານເຂົາເຈົ້າ, ແລະ ດຽວນີ້ ເດັກນ້ອຍໃນບ້ານທັງ ຍິງ ແລະ ຊາຍ ກໍເຂົ້າໂຮງຮຽນເພີ່ມຂຶ້ນ.ພວກແມ່ຍິງ ບອກວ່າ ຍາມໃດລູກມີຄວາມຮູ້ແລ້ວຈະໄດ້ເຮັດວຽກຢູ່ໃນຕົວເມືອງເພື່ອລ້ຽງພໍ່ແມ່ຍາມເຖົ້າແກ່. ພວກແມ່ຍິງ ຍັງເວົ້າອີກວ່າ ດຽວນີ້ພວກເຂົາເຈົ້າເຮັດສວນປູກເຜືອກບົງ ລວມກັນເພື່ອຫາລາຍໄດ້ ໃຫ້ໂຮງຮຽນ ມີທຶນໄວ້ຊື້ເຄື່ອງອຸປະກອນການສອນແບບໃໝ່ຂອງຄູ. ໂຄງການເຄີຍໄດ້ຈັດອຸປະກອນໃຫ້ໂຮງຮຽນແຕ່ 2 ປີທຳອິດ, ດຽວນີ້ກໍໃຊ້ໝົດແລ້ວ; ເຂົາເຈົ້າຈັດກັນເອງໄດ້ດີໃນການເຮັດສວນລວມໝູ່ຂອງເຂົາເຈົ້າເພື່ອສ້າງທຶນຂອງໂຮງຮຽນ.

ຢູ່ໂຮງຮຽນ ມີ ຄູສອນ 2 ຄົນ, ເປັນຜູ່ຊາຍທັງສອງ, ເຂົາເຈົ້າມາຈາກເຂດອື່ນ, ແລະ ເປັນຄົນລາວລຸ່ມ. ເຂົາເຈົ້າຫຽວໄປຢາມບ້ານຍາມພັກຮຽນທ້າຍອາທິດ.

ດຽວນີ້ ມີພວກນັກຮຽນຍິງ 4-5 ຄົນ ກຳລັງຈະຈົບ ປ.5, ຢາກຮຽນຕໍ່ມັດທະຍົມ, ແຕ່ບໍ່ມີໂຮງຮຽນຢູ່ໃກ້ບ້ານ. ໂຮງຮຽນມັດທະຍົມຕັ້ງຢູ່ໃນຕົວເມືອງພຸ້ນ ຖ້າຈະສົ່ງລູກໄປຮຽນຕໍ່ມັດທະຍົມ ກໍບໍ່ມີເງິນ, ແລະ ບໍ່ຢາກໃຫ້ລູກສາວໄປໄກປານນັ້ນເພາະເປັນຫວ່ງ, ພວກລູກສາວ ກໍບໍ່ກ້າໄປໄກ. ບໍ່ມີພີ່ນ້ອງຢູ່ໃນຕົວເມືອງ.

<u>**ຄຳຖາມ :**</u>

1. ໂຄງການນີ້ ຄຳນຶງ ເຖິງ ສິດສະເໝີພາບ ຍິງ-ຊາຍ ບໍ່ ? ອະທິບາຍ ຄຳຕອບ.
2. ໂຄງການນີ້ໄດ້ໃຫ້ຄວາມເປັນທຳ ແກ່ແມ່ຍິງ ໃນການຮັບການສຶກສາບໍ່? ອະທິບາຍ.
3. ຈະສາມາດແກ້ໄຂແນວໃດ ແດ່ ເພື່ອໃຫ້ແມ່ຍິງ ໄດ້ຮັບການສົ່ງເສີມການສຶກສາດີກວ່ານີ້ ? ບອກ 5 ຢ່າງ.
4. ມີທ່າແຮງ ທີ່ຈະແກ້ໄຂ ແນວໃດ? ບອກຢ່າງໜ້ອຍ 3 ຫາ 5 ຢ່າງ

5. ມີຂໍ້ຈຳກັດແນວໃດ ທີ່ຈະແກ້ໄຂ ແນວໃດ? ບອກຢ່າງໜ້ອຍ 3 ຫາ 5 ຢ່າງ
6. ຖ້າປັບປຸງ (ແກ້ໄຂ) ແລ້ວ ແມ່ຍິງ ຈະ ໄດ້ຮັບຄວາມເປັນທຳໃນການໄດ້ຮັບການສຶກສາ ຫລາຍປານໃດ?

## ກໍລະນີ ສຶກສາ 5 :  ວຽກງານສາທາ

ການສັກຢາປ້ອງກັນພະຍາດແມ່ຍິງ ແລະ ເດັກນ້ອຍ ເປັນກິດຈະກໍາຂອງແຜນງານໜຶ່ງ ຂອງລັດຖະບານ ທີ່ສະແດງອອກເຖິງ ການປົກປ້ອງສິດທິແມ່ຍິງ ແລະ ເດັກນ້ອຍ ໃນການຮັກສາ ສຸຂະພາບຂອງເຂົາເຈົ້າ.

ມີຄະນະປະເມີນຜົນພວກໜຶ່ງ ໄປຖາມແມ່ຍິງຢູ່ບ້ານຊົນເຜົ່າຢູ່ຊົນນະບົດແຫ່ງໜຶ່ງວ່າ ເຂົາເຈົ້າໄດ້ຮັບ ການສັກຢາກັນພະຍາດໃຫ້ຕົນເອງ ແລະ ລູກນ້ອຍຄົບທຸກເຂັມບໍ່? ພວກແມ່ຍິງຊົນເຜົ່ານັ້ນຕອບວ່າ ບໍ່ຮູ້ວ່າ ຕ້ອງສັກຢາຈັກເຂັມຈຶ່ງຈະຄົບ. ເພາະພະນັກງານໄປສັກຢາຢູ່ບ້ານ ມີບັນຊີ ລາຍຊື່ ແລ້ວເພິ່ນ ຈະບອກເອງວ່າ ໃຜ ໄດ້ສັກ ຄົບເຂັມແລ້ວ ຫຼື ໃຜ ຍັງອີກຈັກເຂັມ.

ພວກແມ່ຍິງເລົ່າຕໍ່ໄປອີກວ່າ ສ່ວນຫຼາຍເດັກນ້ອຍເກີດມາໃໝ່ ບໍ່ໄດ້ສັກຢາຕາມແພດແນະນໍາ ເພາະຜົວບອກວ່າລູກຍັງນ້ອຍໂພດ, ອີ່ດູຕົນ ຢ້ານລູກເຈັບ, ບາດລູກໃຫຍ່ແລ້ວ ແພດບອກວ່າຊ້າແລ້ວ ສໍາລັບເຂັມທີ 1 ເພາະຕ້ອງສັກຢາໃຫ້ລູກ ແຕ່ມື້ທໍາອິດທີ່ລາວເກີດອອກມາ. ແມ່ຍິງກໍ່ເລີຍເລົ່າຕໍ່ໄປວ່າ ມັນກໍ່ຍາກແລ້ວ ສໍາລັບເຂົາເຈົ້າ ເພາະຕາມປະເພນີແລ້ວ ຫຼັງຈາກເກີດລູກແລ້ວ ພາຍໃນ 1 ເດືອນແມ່ນບໍ່ໃຫ້ແມ່ ແລະ ລູກນ້ອຍອອກຈາກເຮືອນ ເພາະຢ້ານຜີກິນ.

<u>**ຄໍາຖາມ:**</u>  ກະລຸນນາ ໃຊ້ ສາຍຕາ ບົດບາດ ຍິງ-ຊາຍ ຄົ້ນຄວ້າຄໍາຖາມຕໍ່ໄປນີ້

1. ໂຄງການນີ້ ຄໍານຶງ ເຖິງ ສິດສະເໝີພາບ ຍິງ-ຊາຍ ບໍ່ ? ອະທິບາຍ ຄໍາຕອບ.
2. ໂຄງການນີ້ໄດ້ເຮັດໃຫ້ເກີດມີ ຄວາມເປັນທໍາ ສໍາລັບແມ່ຍິງ ບໍ່? ອະທິບາຍ ຄໍາຕອບ.
3. ເປັນຫຍັງ ມັນຈຶ່ງ ມີຄວາມບໍ່ເປັນທໍາເກີດຂຶ້ນ ໃນໂຄງການນີ້ ? ບອກຢ່າງໜ້ອຍ 5 ສາເຫດ.
4. ແຕ່ລະສາເຫດ ຈະສາມາດແກ້ໄຂແນວໃດ ແດ່ ? ບອກ ກ່ຽວກັບ ແຕ່ລະສາເຫດ.
5. ມີທ່າແຮງ ທີ່ຈະແກ້ໄຂ ແນວໃດ ຕໍ່ແຕ່ລະສາເຫດ?
6. ມີ ຂໍ້ຈໍາກັດແນວໃດ ຕໍ່ແຕ່ລະສາເຫດ?
7. ຖ້າປັບປຸງ (ແກ້ໄຂ) ແຕ່ລະສາເຫດ ແລ້ວ ແມ່ຍິງ ຈະ ໄດ້ຮັບຄວາມເປັນທໍາ ຫລາຍປານໃດ?

## ກໍລະນີສຶກສາ 6 : ກະສິກຳເຂດທົ່ງພຽງ

ຢູ່ເຂດ ສະເມດ ເກີດມີນ້ຳຖ້ວມມາຢູ່ເປັນປະຈຳ ຈົນຊາວບ້ານໃນເຂດ ສະເມດ ບໍ່ສາມາດອາໃສກະສິກຳເປັນອາຊີບຫລັກໃນການດຳລົງຊີວິດ.

ພວກຜູ້ຊາຍ ໜີອອກຈາກບ້ານ ເຂົ້າໄປຕົວເມືອງ ເພື່ອຊອກວຽກເຮັດງານທຳ. ພວກແມ່ຍິງ ເປັນ ຜູ້ຄ້າງຢູ່ບ້ານ ເພື່ອດູແລຄອບຄົວ, ພວກເຂົາເຈົ້າ ແລະ ລູກໄດ້ດຳລົງຊີວິດຢູ່ດ້ວຍການຫາປາ, ຫາອາຫານກິນຢູ່ບ່ອນທີ່ມີນ້ຳ ໃນບ່ອນຕ່າງໆຢູ່ຕາມປ່າ, ຫາ ກິນເຜືອກກິນມັນ ແລະ ຜັກປ່າ, ຫາເກັບໄມ້ແຫ້ງເຮັດຟືນ.

ລັດຖະບານ, ມີແຜນງານຕ້ານການນ້ຳຖ້ວມ, ໄດ້ຕົກລົງສ້າງຄູກັນນ້ຳ ເພື່ອບໍ່ໃຫ້ເຂດທົ່ງພຽງ ຖືກນ້ຳຖ້ວມ, ເຊິ່ງເປັນບໍລິເວນກ້ວາງ ທີ່ກວມເອົາເຂດດິນລວມຂອງລັດ. ຄູກັນນ້ຳໄດ້ສ້າງຂຶ້ນຈົນແລ້ວ ແລະ ໄດ້ເກີດມີເຂດເນື້ອທີ່ກ້ວາງສຳລັບເຮັດການຜລິດກະສິກຳໄດ້ຕະຫລອດປີ, ເພາະຄູກັນນ້ຳສາມາດຕັນບໍ່ໃຫ້ນ້ຳຖ້ວມໄດ້.

ນອກຈາກນີ້ ລັດຖະບານຍັງໄດ້ແນະນຳ ໃຫ້ຊາວນາ ນຳໃຊ້ ແນວພັນປັບປຸງຕ່າງໆ ແລະ ເຕັກນິກການປູກທີ່ສາມາດເພີ່ມຜົນຜລິດ.

ໂຄງການ ໄດ້ພິຈາລະນາໄວ້ໃນເອກະສານແມ່ບົດຂອງໂຄງການວ່າ ແມ່ຍິງທີ່ດຳລົງຊີວິດຢູ່ໃນເຂດສະເມດ ນີ້ຈະໄດ້ຮັບຜົນປະໂຫຍດ ຢ່າງເທົ່າທຽມກັນ ໃນການປັບປຸງ ກະສິກຳໃນເຂດນີ້. ແຕ່ວ່າ, ໃນເອກກະສານໂຄງການ ບໍ່ໄດ້ ເວົ້າ ເຈາະຈົງວ່າຈະໄດ້ຜົນປະໂຫຍດອັນໃດ.

ໃນເວລາປະຕິບັດຕົວຈິງໂຄງການນີ້, ພວກພະນັກງານສົ່ງເສີມກະສິກຳໄດ້ຈັດການຝຶກອົບຮົມໃຫ້ແກ່ພວກ ຊາວນາ, ທີ່ບໍ່ມີແມ່ຍິງເຂົ້າຮ່ວມ. ແລະ ໂຄງການກໍມີການວ່າຈ້າງ ແຮງງານທອ້ງຖິ່ນ ເພື່ອທົດລອງເຮັດກະເສດສຸມ ຢູ່ສະຖານີທົດລອງຂອງໂຄງການ ທີ່ມີແມ່ຍິງໜ້ອຍດຽວຈາກເຂດລະເມດໄປຮັບຈ້າງຢູ່ສະຖານີ.

ເວລາສ້າງຄູກັນນ້ຳແລ້ວ, ພວກຊາວນາຮັ່ງໃນເຂດນັ້ນ ໄດ້ເປັນຜູ້ຄວບຄຸມການນຳໃຊ້ເຂດປູກຝັງທັງໝົດ.

<u>ຄຳຖາມ :</u> ໃຊ້ ສາຍຕາ ບົດບາດ ຍິງ-ຊາຍ ຄົ້ນຄວ້າຄຳຖາມຕໍ່ໄປນີ້

1. ໂຄງການນີ້ ຄຳນຶງ ເຖິງ ສິດສະເໝີພາບ ຍິງ-ຊາຍ ບໍ່ ? ອະທິບາຍ ຄຳຕອບ.
2. ໂຄງການນີ້ໄດ້ເຮັດໃຫ້ເກີດມີ ຄວາມເປັນທຳ ສຳລັບແມ່ຍິງ ບໍ່? ອະທິບາຍ ຄຳຕອບ.
3. ເປັນຫຍັງ ມັນຈຶ່ງ ມີຄວາມບໍ່ເປັນທຳເກີດຂຶ້ນ ໃນໂຄງການນີ້ ? ບອກຢ່າງໜ້ອຍ 5 ສາເຫດ.
4. ແຕ່ລະສາເຫດ ຈະສາມາດແກ້ໄຂແນວໃດ ແດ່ ? ບອກ ກ່ຽວກັບ ແຕ່ລະສາເຫດ.
5. ມີທ່າແຮງ ທີ່ຈະແກ້ໄຂ ແນວໃດ ຕໍ່ແຕ່ລະສາເຫດ?
6. ມີ ຂໍ້ຈຳກັດແນວໃດ ຕໍ່ແຕ່ລະສາເຫດ?
7. ຖ້າປັບປຸງ (ແກ້ໄຂ) ແຕ່ລະສາເຫດ ແລ້ວ ແມ່ຍິງ ຈະ ໄດ້ຮັບຄວາມເປັນທຳ ຫລາຍປານໃດ?

# ເອກະສານແຈກ

## ເອກະສານແຈກ 1 : ເພດ ຍິງ ເພດ ຊາຍ, ບົດບາດ ຍິງ-ຊາຍ

### ເພດ : ເພດ ຍິງ, ເພດ ຊາຍ :

ທຳມະຊາດສ້າງໃຫ້ແມ່ຍິງ ແລະ ຜູ່ຊາຍ ເປັນມະນຸດຄືກັນ ແລະ ເປັນເພດຕ່າງກັນ, ເຊິ່ງເປັນອັນທີ່ປ່ຽນແປງບໍ່ໄດ້ (Not changeable).

### ທຳມະຊາດສ້າງ ຍິງ ແລະ ຊາຍ ໃຫ້ເປັນ :

ຄົນ ຄືກັນ ໃນຄວາມເປັນມະນຸດ ທີ່ມີ :

- ຊີວິດ, ຈິດໃຈ,
- ມີຄວາມຮູ້ສຶກ, ມີຄວາມຢາກ,
- ມີຄວາມຄິດ

**ເປັນຄົນຕ່າງກັນ** ທາງດ້ານພາວະຮ່າງກາຍ :

- ແມ່ຍິງອອກລູກໄດ້, ຜູ່ຊາຍອອກ ລູກບໍ່ໄດ້,
- ແມ່ຍິງມີປະຈຳເດືອນ, ຜູ່ຊາຍບໍ່ມີ,
- ແມ່ຍິງມີເຕົ້ານົມທຳມະຊາດລ້ຽງລູກໄດ້, ຜູ່ຊາຍບໍ່ມີ,
- ແມ່ຍິງມີຮວຍໄຂ່, ຜູ່ຊາຍມີນ້ຳເຊື້ອ;

### ບົດບາດ : ບົດບາດ ຍິງ-ຊາຍ :

ສັງຄົມມະນຸດ ກຳນົດ ໃຫ້ ແມ່ຍິງ ແລະ ຜູ່ຊາຍ ມີ ສັກສີ, ມີ ບົດບາດບໍ່ຄືກັນໃນສັງຄົມ ເຊິ່ງ ມັນເປັນການ ກຳນົດ ແລະ ຍອມຮັບ ກັນມາ ແຕ່ສັງຄົມດຶກດຳບັນພຸ້ນ, ແລະ ຍັງຕົກທອດ ມາຮອດ ສັງຄົມປັດຈຸບັນ, ແຕ່ບາງເລື້ອງພຽງແຕ່ເປັນຮູບແບບສະແດງອອກ ແຕ່ບໍ່ປ່ຽນບົດບາດ.

ບົດບາດ ແມ່ນ ສິດ ແລະ ພັນທະ. ສ່ວນຫລາຍ ມັກເວົ້າກັນວ່າ "ພາລະບົດບາດ". ຄຳວ່າ "ພາລະ" ກໍຄືພັນທະ ຫລື ໜ້າທີ່, ສ່ວນຄຳວ່າ "ບົດບາດ" ກໍຄື "ສິດ" ທີ່ມີໃນການຮັບຜິດຊອບຕໍ່ພັນທະ ຫລື ໜ້າທີ່.

ສັງຄົມ ໃຊ້ ຄວາມເຊື່ອຕ່າງໆລວມທັງເລື້ອງ ຜີສາງຕ່າງໆ, ສາດສະໜາ, ຮີດຄອງປະເພນີ, ກົດໝາຍ, ນະໂຍບາຍ, ກົດລະບຽບການປົກຄອງ, ການເມືອງ ແລະ ອື່ນໆ ເປັນເຄື່ອງມື ກຳນົດ ໃຫ້ມີຄວາມແຕກຕ່າງກັນ ລະຫວ່າງ ຍິງ-ຊາຍ.

ເຄື່ອງມື ທັງຫລາຍ ທີ່ກ່າວນັ້ນ ເຮັດໃຫ້ສັງຄົມເກີດມີມາດຖານຕ່າງກັນ ຕໍ່ ຍິງ ແລະ ຊາຍ , ເຊັ່ນ :

1. ຄວາມຫວັງຂອງສັງຄົມຕໍ່ແມ່ຍິງ, ຕໍ່ຜູ້ຊາຍ,
2. ການຍອມຮັບ ແມ່ຍິງ, ຜູ່ຊາຍ
3. ການປະພຶດສະເພາະຂອງເພດ ຍິງ ແລະ ຊາຍ
4. ການປະຕິບັດຕໍ່ ແມ່ຍິງ ແລະ ຜູ່ຊາຍ
5. ສັນຍາລັກ ສະເພາະ ເພດ ຍິງ ແລະ ຊາຍ

ທຸກເລື້ອງທີ່ສັງຄົມມະນຸດກຳນົດ ໃຫ້ ຍິງ ແລະ ຊາຍ ຕ້ອງມີບົດບາດຕ່າງໆນາໆ ນັ້ນ ເປັນສິ່ງທີ່ສາມາດ ປ່ຽນແປງໄດ້ (Changeable)

## ເອກະສານແຈກ 2 : ສຸພາສິດ ຄຳສອນ ໃນສັງຄົມໂບຮານ (ແຕ່ດຶກດຳບັນ)

ຄຳສອນ ທີ່ນິຍົມກັນ ໃນສັງຄົມດຶກດຳບັນ, ທີ່ສອນສັງຄົມໃຫ້ເຫັນບົດບາດ ຍິງ-ຊາຍ ຕ່າງກັນ, ຍັງມີອິດທິພົນຕົກທອດມາຮອດສັງຄົມປັດຈຸບັນ. ອິດທິພົນຂອງຄຳສອນໂບຮານ ຍັງຄົງຕົວຢູ່ໃນສັງຄົມປັດຈຸບັນເກືອບວ່າບໍ່ມີຫຍັງປ່ຽນແປງ, ມີພຽງແຕ່ຮູບແບບການຄົງຕົວຂອງອິດທິພົນເທົ່ານັ້ນເບິ່ງຄືວ່າປ່ຽນໄປ.

ຕົວຢ່າງ ຄຳສອນ ຈຳນວນ ທີ່ຄົນລາວໂບຮານເຄີຍນິຍົມກັນມາ.

1. ເປັນຍິງນີ້ ໃຫ້ທຳຊົງຄືນົກເຈົ່າ ບາດວ່າບິນຂຶ້ນຟ້າ ໃຫ້ຂາວແຈ້ງດັ່ງພະຈັນ.
2. ຜົວເປັນເພັງ ຍ້ອນເມັຽຊ່າງຮູ້
3. ແຫວນງາມຍ້ອນຫົວ ຜົວດີຍ້ອນເມັຽ.
4. ຜົວເປັນຊ້າງເທົ້າໜ້າ, ເມັຍເປັນຊ້າງເທົ້າຫຼັງ.
5. ອັນວ່າ ຍິງ-ຍິງ ນີ້ ມີຫຼາຍຢ່າງ, ຍິງບໍ່ເຮັດບໍ່ສ້າງ ບໍ່ເອີ້ນວ່າ ແມ່ຍິງ.
6. ເປັນຍິງນີ້ ຕ້ອງທຳພຽນດຸໝັ່ນ, ຂວ້າມມືໃຫ້ເປັນລາຍ, ຫງາຍມືໃຫ້ເປັນດອກ.
7. ຍິງບໍ່ມີຜົວນີ້ ຄືແຫວນຫົວເປົ່າ ພອຍບໍ່ມີຢູ່ຄ້າງເຂົາຊິເອີ້ນວ່າກົ່ວຊືນ.
8. ໄດ້ເມັຽບິດເບືອນ ປານກຸມໝູໃນຄອກ ໄດ້ເມັຽ ປອກລອກປານແກ່ໄມ້ທາງປາຍ.
9. ເບິ່ງຊ້າງໃຫ້ເບິ່ງຫາງ, ເບິ່ງນາງໃຫ້ເບິ່ງແມ່.
10. ສິນລິມສ້າງ ອາຄານສັບພະສິ່ງ ມອບໃຫ້ເມຍ ມ້ຽນໄວ້ໃນຢ້າວຈິ່ງແມ່ນຄອງ.
11. ໃຫ້ຜົວພາເມັຽສ້າງນາສວນປູກຫວ່ານ ພາເມັຽເປັນແມ່ບ້ານຄອງຢ້າວຢູ່ດີ.
12. ຊາຍໃຫ້ເປັນຊາຍແທ້ ຢ່າເປັນຊາຍປົນຫີນແຮ່, ຊາຍໃຫ້ເປັນຊາຍແທ້ ຫີນນັ້ນຢ່າໃຫ້ມີ.
13. ໄດ້ເມັຽດີປານໄດ້ແກ້ວຄູນລ່າງ, ໄດ້ເມັຽຊ່າງປານໄດ້ແກ້ວຄູນເຮືອນ.
14. ຍິງໃດ ມີ 2 ຊ້ອນ ຄອງເມືອງເພິ່ນບໍ່ກວ່າ, ຊາຍໄດ້ມີ 5 ຊ້ອນ ຫາໄດ້ໃຫ້ຮີບເອົາ.
15. ຍິງບໍ່ມີຜົວນີ້ ຄື ເຮືອນບໍ່ມີສີໜ້າ ກາບິນມາກໍ່ຊິລ່ວງ ຄືດັ່ງ ຝາກະຕ່າຮ້າງກາງ ບ້ານ ເກືອກຂີ້ຕົມ.
16. ຄຸນພໍ່ທໍ່ພູເຂົາກ້າ ຄຸນແມ່ທໍ່ຟ້າກັບແຜ່ນດິນ
17. ເສັຍແມ່ ແພແຕກ ເສັຍພໍ່ ທໍແຕກ
18. ໄດ້ລູກນີ້ ປານໄດ້ເຊືອກຜູກຄໍ ໄດ້ຜົວນີ້ ປານໄດ້ປໍຜູກສອກ
19. ໄດ້ຜົວປານໄດ້ຂ້ອຍ ໄດ້ລູກນ້ອຍ ປານໄດ້ນັ່ງເມືອງ
20. ລູກຜູ້ຊາຍ ລາຍມືເປັນຂຸມຊັບ

## ເອກະສານແຈກ 3 : ວຽກ 3 ບົດບາດ ຂອງ ຍິງ ແລະ ຊາຍ

**(ກ) : ວຽກ 3 ປະເພດ :**

ໃນສະໃໝໂບຮານ ວຽກຂອງຄອບຄົວມີ 3 ປະເພດໃຫຍ່ຄື:

1. ວຽກການຜລິດ (ວຽກສ້າງວຽກສາສຳລັບຄອບຄົວ, ເຮັດໃຫ້ມີກິນມີໃຊ້ມີໄວ້ເປັນສິນບັດຂອງຄອບຄົວ)
2. ວຽກດູແລເບິ່ງແຍງຄົນຄອບຄົວ (ວຽກເຮືອນວຽກຊານ, ວຽກບໍລິການຄົນໃນຄອບຄົວ, ວຽກເຮືອນ, ວຽກຖະນຸບຳລຸງມະນຸດ)
3. ວຽກຊຸມຊົນ (ວຽກສັງຄົມ, ວຽກນອກຄອບຄົວ, ວຽກບ້ານວຽກເມືອງ);

1. <u>ວຽກການຜລິດ</u>: ໝາຍເຖິງທຸກວຽກທີ່ແມ່ຍິງ ແລະ ຜູ້ຊາຍເຮັດ ທີ່ເປັນການຜລິດເພື່ອຮັບປະກັນຄວາມໝັ້ນຄົງໃນການດຳລົງຊີວິດຂອງຄອບຄົວເຊັ່ນ: ປູກເຂົ້າ ແລະ ລ້ຽງສັດໄວ້ຮັບປະກັນໃຫ້ຄອບຄົວມີສະບຽງອາຫານພຽງພໍເພື່ອຢູ່ລອດ, ຫຼື ວຽກອາຊີບໃດໜຶ່ງ ເພື່ອຫາເງິນມາລ້ຽງຄອບຄົວ ເຊັ່ນ: ຕັດໄມ້ຂາຍເປັນອາຊີບ, ປູກສາລີຂາຍເປັນອາຊີບ, ຜລິດເຄື່ອງຫັດຖະກຳຂາຍເປັນອາຊີບ, ລ້ຽງເປັດລ້ຽງໄກ່ຂາຍ.

2. <u>ວຽກເບິ່ງແຍງຄົນຄອບຄົວ:</u> ໝາຍເຖິງວຽກທີ່ເຮັດເພື່ອຮັບປະກັນຄວາມໝັ້ນຄົງຂອງສຸຂະພາບ ດ້ານ ຮ່າງກາຍ ແລະ ຈິດໃຈ, ເບິ່ງແຍງທຸກຄົນໃນຄອບຄົວໃຫ້ມີພະລານາໄມດີ, ສຸຂະພາບ ແຂງແຮງດີ ເຊິ່ງເລີ່ມຈາກ ການຮັບປະກັນໃຫ້ໄດ້ ກິນອີ່ມ, ກິນດີ ແຕ່ລະມື້, ຢູ່ສະບາຍ ທາງກາຍ ແລະ ທາງໃຈ, ບໍ່ເຈັບບໍ່ໄຂ້, ໄດ້ພັກຜ່ອນ, ມີຄວາມສຸກ, ຕົວຢ່າງ:
   - ຕັກນ້ຳໄວ້ໃຊ້, ໄວ້ອາບ, ໄວ້ແຕ່ງກິນ, ໄວ້ຊັກເຄື່ອງນຸ່ງ.
   - ແຕ່ງກິນ, ຊັກເຄື່ອງ, ອະນາໄມເຮືອນຊານ
   - ເອົາຟືນມາໄວ້ປຸງແຕ່ງອາຫານ ແລະ ຕົ້ມນ້ຳກິນ.
   - ຕຳເຂົ້າໄວ້ກິນ.
   - ຝັດເຂົ້າໄວ້ມ່າ (ຕຽມໄວ້ໃຫ້ຄອບຄົວກິນ).
   - ເອົາລູກນ້ອຍ, ລ້ຽງລູກນ້ອຍ ໃນຄອບຄົວ
   - ດູແລຄົນເຈັບໃນຄອບຄົວ.
   - ບີບເອັນໃຫ້ຄົນໃນຄອບຄົວເວລາອິດເມື່ອຍ ແລະ ອື່ນໆ ອີກ.
   - ພັນຢາສູບໃຫ້ຄົນໃນຄອບຄົວທີ່ສູບຢາ
   - ເສີບເຫລົ້າໃຫ້ຄົນໃນຄອບຄົວ ຫລື ເວລາຫລິ້ນໃພ້ (ການພະນັນຕ່າງໆ)

3. <u>ວຽກຊຸມຊົນ/ວຽກສັງຄົມ</u>: ນອກຈາກວຽກການຜະລິດ ແລະ ວຽກເບິ່ງແຍງຄົນຄອບຄົວໃນເຮືອນຂອງແຕ່ລະຄອບຄົວແລ້ວ, ໃນແຕ່ລະບ້ານຍັງມີວຽກລວມຂອງສັງຄົມຕື່ມອີກ, ເຊິ່ງເອີ້ນກັນວ່າ ວຽກສັງຄົມ ຫຼື ວຽກຂອງຊຸມຊົນ.

## <u>(ຂ) ວຽກໜັກ ແລະ ວຽກຫລາຍ :</u>

ຕັ້ງແຕ່ສັງຄົມໂບຮານມາພຸ້ນ ເຊື່ອກັນວ່າ ວຽກດູແລເບິ່ງແຍງຄອບຄົວ ເປັນ <u>ວຽກບໍ່ໜັກ,</u> ແລະ ຈົນມາຮອດ ສັງຄົມປັດຈຸບັນ ຄົນສ່ວນຫລາຍ ກໍຍັງເຊື່ອກັນແບບນັ້ນຢູ່.

ແຕ່ໃນຕົວຈິງແລ້ວ ວຽກເຮືອນທີ່ແມ່ຍິງເຮັດນັ້ນ ໃຊ້ເວລາເຮັດຕະຫຼອດເວລາ, ແຕ່ເຊົ້າຈົນເດິກ, ບໍ່ມີເວລາພັກຜ່ອນ, ເສັຍສຸຂະພາບຫຼາຍກວ່າພວກຜູ່ຊາຍຜູ້ເຮັດວຽກການຜລິດທີ່ ເອີ້ນວ່າ ວຽກໜັກນັ້ນ.

ເຮັດວຽກການຜລິດ ມີເວລາພັກ ແລະ ມີເວລາເຊົາເຮັດວຽກໄດ້ໄວຫລາຍກວ່າພວກເຮັດວຽກເຮືອນ. ຢູ່ໃນເຮືອນຊານ, ໂດຍທົ່ວໄປ, ແມ່ຍິງເປັນຜູ້ມີວຽກເຮັດຫລາຍ ຈົນບໍ່ມີເວລາ ພັກຜ່ອນເທົ່າທຽມກັບຜູ້ຊາຍ, ເຊິ່ງມັນເປັນການໜັກຕໍ່ສຸຂະພາບຫລາຍເພາະຕ້ອງເຮັດຢູ່ບໍ່ເຊົາ, ເຮັດຫລາຍວຽກພ້ອມກັນ, ພັກຜ່ອນບໍ່ໄດ້ (ບໍ່ໄດ້ດົນ).

ສະພາບການທີ່ແມ່ຍິງມີວຽກເຮັດຫຼາຍໂພດ ເປັນສາເຫດເຮັດໃຫ້ແມ່ຍິງບໍ່ມີໂອກາດໄດ້ຂໍ້ມູນ, ບໍ່ໄດ້ຮຽນ, ບໍ່ໄດ້ສຶກສາ. ແມ່ຍິງ ບໍ່ມີໂອກາດຈະໄດ້ນັ່ງຄິດ, ນັ່ງຄົ້ນຄວ້າ ເພື່ອຄິດວ່າ ເປັນຫຍັງ ຕົນເອງຈຶ່ງຕົກຢູ່ໃນສະພາບທີ່ຕ່າງກັບຜູ້ຊາຍ; ແລະ ຈະຫາວິທີປັບປຸງ ສະພາບຂອງຕົນເອງໄດ້ແນວໃດ. ແມ່ຍິງ ກໍ່ເລີຍມີແຕ່ຕົກຢູ່ໃນສະພາບແບບວົນວຽນໄປມາ ຢູ່ກັບຊີວິດແບບເກົ່າແຕ່ລະມື້, ມີພັນທະຄືເກົ່າຕະຫຼອດມາ. ຜູ້ຊ່ຽວຊານ ເລື່ອງບົດບາດຍິງ-ຊາຍ ເອີ້ນ ການວົນວຽນໄປມາ ນີ້ວ່າ ແມ່ນ ວົນວຽນອຸບາດ (**Vicious cycle**).

## ຮູບພາບສະແດງ ວົນວຽນອຸບາດ:

1

ແມ່ຍິງຂັງຢູ່ກັບວຽກໃນຄອບຄົວ
ຜູ່ຊາຍມີໂອກາດພັດທະນາຕົນເອງ

2

ຜູ່ຊາຍໄດ້ຂໍ້ມູນຂ່າວສານ
ຫລາຍຂຶ້ນເລື້ອຍໆ;
ແມ່ຍິງດ້ອຍການສຶກສາ,
ບໍ່ມີຂໍ້ມູນພຽງພໍເພື່ອພັດທະ
ນາຕົນເອງ, ມີຊີວິດທາງ
ສັງຄົມໜ້ອຍກວ່າຜູ່ຊາຍ

3

ຜູ່ຊາຍມີຄວາມຮູ້ຫລາຍກວ່າແມ່ຍິງກ້າຕັດສິນໃຈ;
ແມ່ຍິງ ບໍ່ກ້າຕັດສິນໃຈ, ເກີດມີແນວຄິດຖືຕົນຕ່ຳ

4

ຜູ່ຊາຍນຳພາຫລາຍຂຶ້ນເລື້ອຍໆ;
ແມ່ຍິງ ບໍ່ມີ ບົດບາດ ໃນຄອບຄົວ
ໃນສັງຄົມ

## (ຄ) ວຽກ 3 ບົດບາດ :

ການແບ່ງວຽກ 3 ປະເພດ ເປັນວຽກຂອງ ເພດ ຍິງ ຫລື ຊາຍ ນັ້ນເປັນສາເຫດເຮັດໃຫ້ ແມ່ຍິງ ແລະ ຜູ່ຊາຍ ມີບົດບາດຕ່າງກັນ ໃນສັງຄົມແຕ່ອະດີດ ແລະ ສະທ້ອນມາຮອດສັງຄົມໃນປັດຈຸບັນ.

- ### ວຽກ 3 ບົດບາດ ຂອງແມ່ຍິງ :

**1. ບົດບາດຂອງແມ່ຍິງ ໃນວຽກການຜະລິດ:**

ແມ່ຍິງ ກໍຄືກັນກັບ ຜູ່ຊາຍ ມີໜ້າທີ່ໃນການເຮັດວຽກສ້າງລາຍຮັບໃສ່ຄອບຄົວ ແຕ່ວ່າ ແມ່ຍິງ ເສຍປຽບໃຫ້ ຜູ່ຊາຍເລື້ອຍໆ ເພາະວ່າ ແມ່ຍິງສ່ວນຫຼາຍ ເຮັດວຽກການຜະລິດໃນ ພາກສ່ວນ ທີ່ ບໍ່ເປັນທາງການ (ພາກສ່ວນທີ່ບໍ່ຖືກຮັບຮູ້ເປັນທາງການ ແລະ ມີການສ້າງລາຍຮັບໄດ້ໜ້ອຍ ເຊັ່ນ: ຜະລິດເຄື່ອງຫັດຖະກຳ, ຂາຍຜັກ, ຂາຍເຄື່ອງນາຂອງປ່າທີ່ເປັນອາຫານປະຈຳວັນ). ຍິ່ງໄປກວ່າ ນັ້ນ, ວຽກງານການຜະລິດ ຂອງ ພວກແມ່ຍິງ ຍັງຖືກຖືວ່າເປັນວຽກສຳຮອງຕໍ່ຈາກວຽກຂອງຜົວ ຂອງເຂົາເຈົ້າ ໂດຍມີຢູ່ໃນເກືອບທຸກສັງຄົມ, ໂດຍຕາມປະເພນີແລ້ວ ແມ່ຍິງຖືກຮັບຮູ້ວ່າ ພວກ ເຂົາເຈົ້າ ບໍ່ກ່ຽວຂ້ອງກັບວຽກການຜະລິດ. ດ້ວຍເຫດນັ້ນ, ວັດທະນະທຳຂອງຫລາຍສັງຄົມທີ່ແຕກຕ່າງກັນນັ້ນ ຈຶ່ງບໍ່

ມັກສະໜັບສະໜູນໃຫ້ແມ່ຍິງມີການສຶກສາ ເພາະເຫັນວ່າ ບໍ່ຈຳເປັນ, ຍ້ອນມີການສົມ ມຸດຕິຖານໄວ້ວ່າ ແມ່ຍິງບໍ່ກ່ຽວຂ້ອງກັບວຽກການຜະລິດ ນັ້ນ ມັນຈຶ່ງກາຍເປັນ ການຈຳກັດ ເຮັດໃຫ້ແມ່ຍິງ ບໍ່ສາມາດເປັນໄປໄດ້ ທີ່ຈະເລືອກປະເພດວຽກເຮັດໄດ້ຫລາຍປະເພດ.

<u>2. ບົດບາດຂອງແມ່ຍິງ ໃນວຽກການດູແລເບິ່ງແຍງຄອບຄົວ:</u>

ບົດບາດ ຂອງວຽກແມ່ຍິງໃນຄົວເຮືອນ ມີຄວາມໝາຍສຳຄັນສຳລັບສັງຄົມ, ໂດຍທົ່ວໄປ ແລ້ວ ແມ່ຍິງ ເປັນຜູ້ຮັບຜິດຊອບໃນການຢູ່ດີກິນດີຂອງສະມາຊິກໃນຄອບຄົວ ທັງທາງດ້ານຮ່າງກາຍ ແລະ ຈິດໃຈ. ພວກແມ່ຍິງ ຮັບຜິດຊອບ ກິດຈະກຳທັງຫລາຍ ພາຍໃນເຮືອນ ເພື່ອຮັບປະກັນ ການເຕີບໃຫຍ່ ແລະ ຜົນສຳເລັດຂອງສະມາຊິກໃນຄອບຄົວ.

<u>3. ບົດບາດຂອງແມ່ຍິງ ໃນວຽກຊຸມຊົນ:</u>

ກໍຄືກັນກັບບົດບາດ ທາງການຜະລິດ ສ່ວນຫລາຍຢູ່ໃນຊຸມຊົນ ແມ່ຍິງ ມີບົດບາດ ແລະ ສ່ວນ ຮ່ວມໃນການຕັດສິນບັນຫາ ແລະ ຮັບປະກັນຕໍ່ການຕັດສິນບັນຫາ, ແຕ່ບົດບາດຂອງເຂົາເຈົ້າ ບໍ່ ມີເປັນທາງການ. ແຕ່ໃນສາຍຕາ ຂອງຄົນພາຍນອກມັກເບິ່ງບໍ່ເຫັນບົດບາດ ເຫລົ່ານັ້ນຂອງພວກ ແມ່ຍິງ.

- **ວຽກ 2 ບົດບາດ ຂອງຜູ້ຊາຍ :**

<u>1. ບົດບາດຂອງ ຜູ້ຊາຍ ໃນວຽກການຜະລິດ :</u>

ບົດບາດ ຂອງຜູ້ຊາຍ ໃນພາກສ່ວນການຜະລິດສ່ວນຫລາຍແລ້ວ ແມ່ນເປັນທາງການ. ເກືອບ ທຸກສັງຄົມກຳນົດວ່າ ຜູ້ຊາຍແມ່ນຜູ້ຮັບຜິດຊອບໃນການສ້າງລາຍຮັບໃຫ້ຄອບຄົວ ແລະ ເປັນຜູ້ ຫາລ້ຽງຄອບ ຄົວ. ວຽກຂອງພວກຜູ້ຊາຍສ່ວນຫລາຍ ແມ່ນເນັ້ນໃສ່ວຽກຢູ່ນອກຄອບຄົວ. ສ່ວນຫລາຍມັກຖືກໃຫ້ຄຸນຄ່າຫລາຍກວ່າ ວຽກການຜະລິດຂອງແມ່ຍິງ, ເພາະສັງຄົມເຊື່ອວ່າບົດ ບາດຂອງແມ່ຍິງນັ້ນ ມີຄວາມສຳຄັນຢູ່ພາຍໃນເຮືອນຫລາຍກວ່າ ແລະ ໃນຮູບແບບດຽວກັນ ກໍ ເຊື່ອວ່າບົດບາດຂອງຜູ້ຊາຍ ໃນວຽກເຮືອນນັ້ນມີຈຳກັດ (ເຊັ່ນ: ແມ່ຍິງຕ້ອງເຮັດວຽກໃນຄົວເຮືອນ ຫລາຍຊົ່ວໂມງ ກວ່າຜູ້ຊາຍ).

<u>2. ບົດບາດຂອງ ຜູ້ຊາຍ ໃນວຽກບ້ານການເມືອງ:</u>

_ຜູ້ຊາຍ ຖືກຍອມຮັບວ່າມີບົດບາດທາງການເມືອງໄດ້ຫລາຍກວ່າ ແມ່ຍິງ, ມັນເປັນທີ່ເຫັນໄດ້ຈະແຈ້ງຢູ່ເລື້ອຍໆ ຢ່າງເປັນທາງການວ່າ ຜູ້ຊາຍມີຕຳແໜ່ງໃນການເປັນຫົວໜ້າທາງການເມືອງ ແລະ ເປັນຫົວໜ້າໃນຊຸມຊົນ, ເຖິງຈະມີ ແມ່ຍິງກ່ຽວຂ້ອງໃນພາກສ່ວນການເມືອງກໍດີ, ແຕ່ກໍມີ ຈຳນວນໜ້ອຍກວ່າ ແລະ ບົດບາດຂອງເຂົາເຈົ້າກໍມັກຈຳກັດ ຢູ່ພາກສ່ວນສະເພາະໃດໜຶ່ງເທົ່ານັ້ນ.

## ເອກະສານແຈກ 4 :

## ຮາກກົກຮາກເຫົ້າ ທີ່ເປັນສາເຫດ ຂອງເລື້ອງ ບົດບາດ ຍິງ-ຊາຍ

ທຳມະຊາດໃຫ້ກຳເນີດມະນຸດອອກມາເປັນ 2 ເພດຕ່າງກັນ, ຍິງ ແລະ ຊາຍ. ຊ່ຽວຊານດ້ານມະນຸດວິທະຍາ ໄດ້ໃຫ້ຂໍ້ສັນນິຖານ ໃນລັກສະນະເປັນປັດຊະຍາຂໍ້ໜຶ່ງ ວ່າເລື້ອງບົດບາດ ຍິງ-ຊາຍ ໄດ້ເກີດມາ ຕັ້ງແຕ່ ມີແມ່ຍິງ ແລະ ຜູ່ຊາຍ ພວກທຳອິດ ໃນໂລກພຸ້ນ.

ແມ່ຍິງ ແລະ ຜູ່ຊາຍ ພວກທຳອິດ ແຕ່ດຶກດຳບັນ ນັ້ນ ໄດ້ເລີ່ມຢູ່ຮ່ວມກັນ, ແລ້ວເກີດ ມີສາຍພົວພັນກັນ ເຮັດໃຫ້ແມ່ຍິງຖືພາ ແລະ ອອກລູກ, ແລ້ວ ແມ່ຍິງຕ້ອງລ້ຽງລູກນ້ອຍ ເພາະຕົນເອງມີເຕົ້ານົມຕິດ ຕົວເກີດມານຳ, ສ່ວນຜູ້ຊາຍກໍໄດ້ອອກໄປຊອກຫາອາຫານກິນ ແລະ ນຳອາຫານມາປັນສູ່ແມ່ຍິງ ແລະ ລູກນ້ອຍກິນ.

ໃນເວລາທີ່ແມ່ຍິງຕ້ອງຢຸດຢູ່ກັບທີ່ (ໃນຖ້ຳ, ໃນກະຕູບ) ເພື່ອລ້ຽງລູກນ້ອຍ ເປັນເວລາຫຼາຍມື້, ຫຼາຍອາທິດ, ຫຼາຍເດືອນ, ຮອດຫລາຍປີ ນັ້ນ, ຜູ່ຊາຍ ໄດ້ຖືກຮັບຮູ້ວ່າ ເປັນຜູ້ໄປຊອກຫາອາຫານມາໃຫ້ແມ່ຍິງ ແລະ ເດັກນ້ອຍ. ຜູ້ຊາຍໄດ້ເປັນເຈົ້າຂອງອາຫານທີ່ຕົນເອງຫາມາໄດ້, ແລະ ເປັນຜູ່ຄວບ ຄຸມອາຫານທີ່ມີ, ແລະ ຜູ່ຊາຍກໍເປັນຜູ່ຕັດສິນ ແບ່ງປັນອາຫານໃຫ້ແມ່ຍິງ ແລະ ເດັກນ້ອຍໄດ້ກິນນຳ. ຜູ່ຊາຍເປັນຜູ້ມີສິດວ່າຈະແບ່ງປັນໃຫ້ໜ້ອຍ ຫຼື ຫຼາຍ, ຫຼື ຈະຮ່ວມກັນກິນ ຕາມຄວາມຢາກກິນ ຈົນອີ່ມຂອງແຕ່ລະຄົນ, ຫຼື ບໍ່ອີ່ມ ຕາມທີ່ອາຫານຫາມາໄດ້.

ເວລາ ຜູ່ຊາຍອອກໄປຫາອາຫານນັ້ນ ຜູ່ຊາຍມີໂອກາດເຫັນຫຼາຍສິ່ງຫຼາຍຢ່າງໃນປ່າ (ໃນໂລກອັນກວ້າງໄກ), ມີໂອກາດໄດ້ເຫັນຫລາຍສິ່ງຫລາຍຢ່າງ ກວ່າແມ່ຍິງ, ມີເວລາເຫັນເລື້ອຍໆກວ່າ ແມ່ຍິງ, ຜູ່ຊາຍຈຶ່ງຖືກຮັບຮູ້ວ່າເປັນຜູ້ມີຄວາມຮູ້ຫຼາຍໆເລື່ອງກວ່າແມ່ຍິງ.

ໃນເມື່ອຜູ່ຊາຍເປັນທັງເຈົ້າຂອງອາຫານ, ເປັນທັງຜູ້ຮູ້ເຫັນຫຼາຍເລື່ອງກວ່າແມ່ຍິງ, ຜູ້ຊາຍ ຈຶ່ງເປັນ ຜູ້ກ້າບອກ, ເປັນຜູ້ອອກຄຳສັ່ງຕໍ່ແມ່ຍິງເກືອບທຸກເລື່ອງ, ແລະ ແມ່ຍິງ ກໍຍອມຮັບຟັງສິ່ງທີ່ຜູ້ຊາຍບອກເລົ່ານັ້ນ. ແລະ ຜູ້ຊາຍກໍບໍ່ເຊື່ອວ່າແມ່ຍິງກໍມີເລື້ອງທີ່ຢາກເລົ່າໃຫ້ຜູ້ຊາຍຟັງ ເພາະຖືກຂັງຕົວຢູ່ກັບທີ່ຕະຫລອດ.

ຜົນຕາມມາ ຜູ່ຊາຍກໍ່ເລີຍ ກາຍເປັນຜູ້ອອກຄຳສັ່ງຕະຫຼອດເວລາ, ມີສິດຕັດສິນບັນຫາ ຫຼາຍຂຶ້ນເລື້ອຍໆ, ແຂງແກ່ນຫຼາຍຂຶ້ນຕໍ່ແມ່ຍິງ ແລະ ເພີ່ມຂຶ້ນ. ໃນທີ່ສຸດກໍມີຮອດ ການໃຊ້ສິດ ຕໍ່ແມ່ຍິງ ເກີນຂອບເຂດ (ທຸບຕີ, ປ້ອຍດ່າ, ຈົນຮອດຂ້າຖິ້ມ ຫຼື ຊື້ຂາຍ ແມ່ຍິງ) ສ່ວນແມ່ຍິງກໍ່ຍອມ ຮັບຄຳສັ່ງ ຂອງຜູ້ຊາຍ ເພາະບໍ່ຮູ້ຈະສູ້, ໃນທີ່ສຸດ ແມ່ຍິງກໍກາຍມາເປັນຜູ່ທີ່ຖືຕົວຕ່ຳ, ຕ່ຳກວ່າຜູ້ຊາຍ, ບໍ່ກ້າຫານ

ຈະໂຕ້ຕອບຜູ່ຊາຍ, ຍອມຮັບວ່າບໍ່ມີທາງສູ້ຜູ້ຊາຍໄດ້. ແລະ ຜູ່ຊາຍ ກໍເລີຍກາຍເປັນຜູ້ກຳອຳນາດ ໃນສັງຄົມ ຫລາຍກວ່າ ແມ່ຍິງ, ແລະ ເປັນນາຍ ແມ່ຍິງ.

ໃນທີ່ສຸດ, ຖານະແມ່ຍິງ ກໍ່ກາຍເປັນ ຜູ້ເສັຽປຽບ, ຜູ້ຊາຍ ກໍ່ຄື ຜູ້ໄດ້ປຽບ. ຍ້ອນຄວາມແຕກຕ່າງກັນ ທາງດ້ານຮ່າງກາຍ, ຍິງ ແລະ ຊາຍ ຈຶ່ງມີພັນທະ ຕໍ່ໜ້າວຽກຕ່າງກັນ, ອັນນີ້ເປັນຮາກເຫງົ້າສາເຫດ ເປັນແຫລ່ງກຳເນີດ ຂອງຄວາມແຕກຕ່າງກັນ ໃນບົດບາດ ຂອງ ຍິງ ແລະ ຊາຍ.

ໃນເມື່ອ ຜູ້ຊາຍເປັນຜູ້ໄດ້ປຽບຢູ່ເລື້ອຍໆ, ດັ່ງນັ້ນ ຍາມໃດຜູ່ຊາຍກໍ່ເລີຍ **<u>ຄິດວ່າ</u>** ຕົນເອງເກັ່ງກວ່າແມ່ ຍິງ, ໃຊ້ອຳນາດ, ມີແຕ່ອອກຄຳສັ່ງ, ບໍ່ເຮັດຫຍັງຫຼາຍຢ່າງອີກຕໍ່ໆໄປ, ຈົນຮອດບໍ່ຮັບຜິດຊອບ ວຽກໃນ ເຮືອນ, ວຽກໃນການຜລິດຫຼາຍໆຢ່າງ, ຈົນກາຍເປັນຜູ່ບໍ່ຮູ້ວຽກລະອຽດຫລາຍຢ່າງຂຶ້ນເລື້ອຍໆ. ຈົນ ໃນທີ່ສຸດ ໃນປະຫວັດສາດສະໃໝຕ່າງໆຂອງຫລາຍປະເທດຈຶ່ງເຄີຍຮູ້ກັບສະໃໝ ແມ່ຍິງມີອຳນາດ (ມານດາ ທິລາດ) ມາແລ້ວ.

ເປັນທີ່ຮູ້ວ່າ ຜ່ານການວິວັດທະນາການຂອງສັງຄົມມະນຸດ ນັ້ນ ໂລກເຄີຍຮູ້ກັບ ສະໃໝ ບິດາທິລາດ (ຜູ່ຊາຍ ຄອງອຳນາດ) ແລະ ມານດາທິລາດ (ແມ່ຍິງ ຄອງອຳນາດ).

ສັງຄົມ ກຳນົດ ສັກສີ ແລະ ບົດບາດຕ່າງກັນ ໃຫ້ແກ່ ແມ່ຍິງ ແລະ ຜູ່ຊາຍ ເຊິ່ງ ສືບຕໍ່ກັນມາ ຢ່າງລຽນຕິດຫຼາຍສັດຕະວັດ, ຈົນກາຍເປັນ ກົດໝາຍທາງສັງຄົມ (ຮີດຄອງປະເພນີ, ຂະນົບທຳນຽມ ທັງໝົດ), ເຊິ່ງແຕ່ລະສັງຄົມ ມີການກຳນົດ ສັກສີ ແລະ ບົດບາດ ໃຫ້ແກ່ ແມ່ຍິງ ແລະ ຜູ່ຊາຍ ຕ່າງກັບ ສັງຄົມອື່ນ, ເຊິ່ງໂດຍລວມ ແລ້ວ ກໍບໍ່ມີ້ມການໄດ້ປຽບ ແລະ ເສັຽປຽບ ກັນ ມາຕະຫລອດ, ແຕ່ ເປັນທີ່ ຮູ້ດີ ວ່າ ຜູ່ຊາຍ ເປັນຜູ່ໄດ້ປຽບໃນຫລາຍກວ່າ ແລະ ເປັນຜູ່ມີອຳນາດ ແລະ ໃຊ້ອຳ ນາດຕໍ່ແມ່ຍິງ.

ໃນທີ່ສຸດ ກໍ່ສະຫຼຸບໄດ້ວ່າ ຍ້ອນ **<u>ທຳມະຊາດ</u>** ສ້າງເພດຕ່າງກັນໃຫ້ມະນຸດ (ທີ່ບໍ່ປ່ຽນແປງໄດ້) ແລະ ຍ້ອນ **<u>ສັງຄົມ</u>** ກຳນົດໃຫ້, ສັກສີ ແລະ ບົດບາດ ແມ່ຍິງ ແລະ ຜູ່ຊາຍ ຈຶ່ງແຕກຕ່າງກັນ, ສັງຄົມໃຊ້ **<u>ເສດຖະກິດ</u>** (ຊັບພະຍາກອນ, ຜົນປະໂຫຍດ) ເປັນປັດໃຈໜຶ່ງ ທີ່ເຮັດໃຫ້ແມ່ ຍິງຖືກຈຳແນກ ມາ ແຕ່ໃດໆ.

ປັດຈຸບັນນີ້ ເຖິງວ່າໂລກທັນສະໃໝຫຼາຍຂຶ້ນໃນຫຼາຍດ້ານ ແລ້ວກໍ່ຕາມ, ແຕ່ໃນທາງສັງຄົມ ກົດໝາຍ ທາງສັງຄົມ ທີ່ກຳນົດ ບົດບາດ ແມ່ຍິງຕ່ຳກວ່າ ບົດບາດຂອງ ຜູ້ຊາຍ ນັ້ນ ກໍຍັງມີອິດທິພົນຢູ່ຫຼາຍ, ບໍ່ທັນສະໃໝ ໃນລະດັບສູງ ຄືກັບ ໂລກວັດຖຸ ເທື່ອ.

ກົດໝາຍສັງຄົມຍັງມີອິດທິພົນຄອບງຳ ຢູ່ໄດ້ຢ່າງແຂງແກ່ນ ກວ່າກົດໝາຍນິຕິບັນຍັດ ທີ່ກຳນົດອອກມາຕາມຫຼັງ, ຫວ່າງບໍ່ເທົ່າໃດ ທົດສະວັດມານີ້ເອງ ທີ່ປະກາດວ່າ ແມ່ຍິງ ແລະ ຜູ້ຊາຍ ມີສິດທິມະນຸດສະຍະຊົນເທົ່າທຽມກັນ.

| |
|---|
| ສັງຄົມ ກຳນົດ ບົດບາດ ໃຫ້ແກ່ ແມ່ຍິງ ແລະ ຜູ່ຊາຍ ຕ່າງກັນ ບົນພື້ນຖານ ຜົນປະໂຫຍດ (ເລີ່ມຈາກຜົນປະໂຫຍດເສດຖະກິດເປັນຕົ້ນຕໍ), ແລະ ມີປັດໃຈ ອື່ນໆເຂົ້າຕື່ມອີກ ໃນການ ກຳ ນົດນັ້ນ ເຊັ່ນ : ສ່ຳອາຍຸ (ຜູ່ໃຫຍ່, ເດັກນ້ອຍ), ເຊື້ອຊາດ, ສີຜິວ, ວັດທະນະທຳສະເພາະເຜົ່າ, ສາດສະໜາ, ລະບົບ ການເມືອງໃດໜຶ່ງ ໃນສັງຄົມ, ແລະ ອື່ນໆ, ເຊິ່ງໃນທີ່ສຸດ ໄດ້ເຮັດໃຫ້ການ ຈຳແນກ ບົດບາດ ຍິງ-ຊາຍ ທີ່ແມ່ນ ຜູ່ຊາຍຜູ່ມີອຳນາດ ແລະ ແມ່ຍິງຜູ່ບໍ່ມີອຳນາດ ນັ້ນຍິ່ງທະວີຂຶ້ນ, ຈົນຮອດ ພວກຜູ່ຊາຍ ກໍຖືກຈຳແນກ ເຊັ່ນດຽວກັນ ດ້ວຍພວກຜູ້ຊາຍດ້ວນກັນ ລະຫວ່າງ ຜູ່ມີອຳນາດ ແລະ ບໍ່ມີອຳນາດຕື່ມອີກ. |

## ເອກະສານແຈກ 5 : ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ ແລະ ຄວາມທ່ຽງທຳ ລະຫວ່າງ ຍິງ ແລະ ຊາຍ

**ຄວາມສະເໝີພາບ ລະຫວ່າງ ຍິງ-ຊາຍ** ແມ່ນ ການປະຕິບັດ ທີ່ເທົ່າທຽມ ກັນ ລະຫວ່າງ ຍິງ ແລະ ຊາຍ ໃນທາງກົດໝາຍ ແລະ ໃນທາງນະໂຍບາຍ ທັງຫລາຍ, ໃນການເຂົ້າເຖິງ ຊັບພະຍາກອນ ແລະ ການບໍລິການ ທັງຫລາຍ ຂອງຄອບຄົວ, ຂອງຊຸມຊົນ ແລະ ຂອງສັງຄົມ.

**ຄວາມທ່ຽງທຳ ລະຫວ່າງ ຍິງ ແລະ ຊາຍ** ແມ່ນ ຄວາມເປັນທຳ ແລະ ຍຸຕິທຳ ໃນການ ແບ່ງປັນແຈກຢາຍ ຜົນປະໂຫຍດ ແລະ ຄວາມຮັບຜິດຊອບ ລະຫວ່າງ ແມ່ຍິງ ແລະ ຜູ່ຊາຍ, ເຊິ່ງ ຕ້ອງມີໂຄງການ ແລະ ແຜນງານ ສະເພາະ ສຳລັບແມ່ຍິງ ເພື່ອເຮັດໃຫ້ຄວາມບໍ່ເທົ່າທຽມກັນ ໝົດໄປ.

ຢາກເບິ່ງວ່າ ແມ່ນ ຄວາມສະເໝີພາບ ລະຫວ່າງ ແມ່ຍິງ ແລະ ຜູ່ຊາຍ ແທ້ຈິງ ຫລື ບໍ່ ນັ້ນ ແມ່ນ ຄວນ ເບິ່ງ ເລື້ອງສາຍພົວພັນ ທາງດ້ານອຳນາດ ລະຫວ່າງ ແມ່ຍິງ ແລະ ຜູ່ຊາຍ : ໃຜເປັນຜູ້ມີສິດ (ມີອຳນາດ) ຕັດສິນໃຈ, ໃນການແບ່ງປັນ ຜົນປະໂຫຍດ, ໃນການຄວບຄຸມ ແລະ ແບ່ງປັນ ຊັບພະຍາກອນ ສ່ວນລວມ ຂອງ ແມ່ຍິງ ແລະ ຜູ່ຊາຍ; ທັງ ແມ່ຍິງ ແລະ ຜູ່ຊາຍ ມີສິດຕັດສິນໃຈຮ່ວມກັນແບບເທົ່າ ທຽມກັນບໍ່, ໄດ້ຮັບຜົນປະໂຫຍດຮ່ວມກັນຢ່າງເປັນທຳບໍ່.

**Gender equality**[1] means equal treatment of women and men in laws and policies, and in access to resources and services within families, communities and society at large.

**Gender equity**[2] means fairness and justice in the distribution of benefits and responsibilities between women and men, and often requires women-specific projects and programs to end the existing inequality.

---

[1] Reference :definition given in the training manual prepared for the UNIFEM-ESEARO, by the Asia Pacific COUNCIL of AIDS Service Organizations (APCASO) and the Asia Pacific Rainbow Network (AP-Rainbow)

[2] same reference as footnote 1

## ເອກະສານແຈກ 6 : ເລື່ອງບົດບາດ ຍິງ-ຊາຍ ແມ່ນ ປະກົດການ ທາງສັງຄົມ ໃນສັງຄົມ

ເລື່ອງບົດບາດ ຍິງ-ຊາຍ ຈຶ່ງແມ່ນເລື່ອງສັງຄົມກຳນົດ ແລະ ແມ່ນເລື່ອງທາງສັງຄົມ.

1. ມັນແມ່ນເລື່ອງເກີດຂື້ນໃນສາຍພົວພັນ ລະຫວ່າງ ຍິງ ແລະ ຊາຍ, ມັນບໍ່ແມ່ນເລື່ອງຂອງແມ່ຍິງຝ່າຍດຽວ ຫຼື ຂອງຜູ້ຊາຍ ຝ່າຍດຽວ.
2. ມັນເປັນເລື່ອງຂອງສັງຄົມ ທີ່ມີປະຫວັດສາດ : ມີອະດີດ, ມີປັດຈຸບັນ, ແລະ ອະນາຄົດ
3. ມັນມີຢູ່ທຸກແງ່ທຸກມຸມຂອງຊີວິດ ທີ່ສະແດງອອກໃນຮູບຂອງສາຍພົວພັນ ບຸກຄົນຕໍ່ບຸກຄົນ, ຕໍ່ຄອບຄົວ, ຕໍ່ສັງຄົມ; ໃນດ້ານເສດຖະກິດ, ການເມືອງ, ການປົກຄອງ ແລະ ອື່ນໆທັງໝົດ;
4. ເລື້ອງ ບົດບາດ ຍິງ-ຊາຍ ສາມາດເບິ່ງເຫັນໄດ້ໃນ 3 ລະດັບຕ່າງກັນ ເຊັ່ນ :

   (1) ລະດັບເປັນ ໂຄງສ້າງຂອງສັງຄົມ (ກົດໝາຍ, ນະໂຍບາຍ, ກົດໝາຍສັງຄົມ, ລະບົບການປົກຄອງ, ລະບົບອື່ນໆ);
   (2) ລະດັບ ເປັນສັນຍາລັກສະເພາະເພດ (ສັນຍາລັກຂອງແມ່ຍິງ, ສັນຍາລັກຂອງຜູ້ຊາຍ) ເຊັ່ນ : ຜົມຜູ້ຊາຍສັ້ນ, ຜົມແມ່ຍິງຍາວກວ່າ, ແມ່ຍິງນຸ່ງສິ້ນ ແລະ ກະໂປ່ງ, ຜູ້ຊາຍນຸ່ງຜ້າສະໂຫລ່ງ ແລະ ສົ້ງ);
   (3) ລະດັບ ເປັນການພົວພັນ ລະຫວ່າງ ບຸກຄົນ ກັບ ບຸກຄົນ;

5. ເລື່ອງບົດບາດ ຍິງ-ຊາຍ ເປັນບັນຫາ ລະອຽດອ່ອນ, ໝູນຕົວໄວຢູ່ຕະຫຼອດເວລາ. ມີທິດສະດີໜຶ່ງ ຂອງລັດທິເຕົາ / ປະເທດ ຈີນ / ທີ່ເອີ້ນວ່າ "ຢີງ-ແຢງ" ທີ່ຖືກນຳມາໃຊ້ອະທິບາຍເປັນ ຂໍ້ຄິດໃນເລື້ອງ ແມ່ຍິງ ແລະ ຜູ້ຊາຍ.

### ຢີງ ແລະ ແຢງ Ying and Yang



ຢິງ ແລະ ແຢງ ປຽບເໝືອນ 1 ວັດຖຸ ທີ່ມີ 2 ດ້ານ. ຮູບປາ 2 ຕົວໃນ 1 ວົງກົມ ມີສີດໍາ ແລະ ສີຂາວ (ມືດ ແລະ ແຈ້ງ). ໃນຄວາມມືດ (ປາສີດໍາ) ກໍ່ມີຄວາມແຈ້ງ (ຕາປາມີສີຂາວ); ໃນຄວາມແຈ້ງ (ປາສີຂາວ) ກໍ່ມີຄວາມມືດ (ຕາປາມີສີດໍາ); ສອງດ້ານທີ່ກົງກັນຂ້າມແບບນີ້ ມີຢູ່ໃນແຕ່ລະວັດຖຸ.

ມະນຸດເຮົາໃນສັງຄົມ ກໍ່ເຊັ່ນດຽວກັນ ແຕ່ລະຄົນ ກໍ່ມີທັງສອງດ້ານ ຢິງ ແລະ ແຢງ ເຊັ່ນ: ແຂງ ແລະ ອ່ອນ, ດີ ແລະ ຊົ່ວ, ໄວ ແລະ ຊ້າ, ສະຫຼາດ ແລະ ໂງ່, ໃຈກວ້າງ ແລະ ໃຈແຄບ, ກ້າຫານ ແລະ ອ່ອນແອ ຢູ່ຮ່ວມກັນສະເໝີ.

ໃນເວລາຄິດເຖິງຄົນໃນສັງຄົມ ກໍ່ຄວນຄິດເຖິງທັງ ຍິງ ແລະ ຊາຍ ແຕ່ບໍ່ແມ່ນຕ້ອງແບ່ງແຍກ ວ່າ ແມ່ຍິງເປັນແບບໃດໜຶ່ງ (ຕົວຢ່າງ: ສັງຄົມ ເຄີຍແບ່ງແຍກວ່າ ແມ່ຍິງບໍ່ກ້າຕັດສິນບັນຫາ, ມັກຈົ່ມ) ແລະ ຜູ້ຊາຍເປັນແບບໃດໜຶ່ງ (ຕົວຢ່າງ: ກ້າຫານ, ສຸຂຸມ). ແຕ່ຄວນ ຄືດວ່າ ມະນຸດ ແຕ່ລະຄົນ ເຖິງຈະເປັນ ຍິງ ຫລື ຊາຍ ກໍຕາມ ແຕ່ລະຄົນເພດ ກໍມີທັງ ຢິງ ແລະ ແຢງ ຢູ່ຮ່ວມກັນ ໃນແຕ່ລະຄົນ. ຈະແຍກວ່າ ແມ່ຍິງເປັນພຽງ ຢິງ ຫຼື ແຢງ ກໍ່ບໍ່ຖືກຕາມຄວາມເປັນຈິງ; ຫຼື ຈະແຍກວ່າ ຜູ້ຊາຍ ເປັນພຽງ ແຢງ ຫຼື ຢິງ ກໍ່ບໍ່ຖືກ ຕາມຄວາມເປັນຈິງ ຄືກັນ.

ໃນທີ່ສຸດ ຖ້າຈະເວົ້າກັບມະນຸດບໍ່ຄວນເບິ່ງເພດ ເປັນພື້ນຖານ (ເພດຍິງ, ຫຼື ເພດຊາຍ) ແຕ່ຄວນ ເບິ່ງຄວາມເປັນມະນຸດແຕ່ລະຄົນ, ມັນຈະຊ່ວຍໃຫ້ຫລີກຈາກຄວາມລໍາອຽງດ້ານເພດໄດ້ຫລາຍ ກວ່າ.